# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ພຶດສະພາ 2025
ປີທີ 14
ສະບັບທີ 1016
ລາຍສັປະດາ


## ຄະນະຜູ້ແທນຂັ້ນສູງຂອງລາວ ສຳເລັດການເຂົ້າຮ່ວມພິທີສະເຫຼີມສະຫຼອງວັນປົດປ່ອຍພາກໃຕ້, ທ້ອນໂຮມປະເທດຊາດຫວຽດນາມເປັນເອກະພາບ



(ສພຊ) - ໂດຍຕອບສະໜອງຕາມການເຊື້ອເຊີນຂອງສະຫາຍ ໂຕ ເລິມ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ຕອນເຊົ້າເວລາ 6:30 ໂມງ ຂອງວັນທີ 30 ເມສານີ້, ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ

ອ່ານຕໍ່ໜ້າ 3

## 2 ເລຂາທິການໃຫຍ່ ລາວ-ຫວຽດນາມ ພົບປະສອງຝ່າຍ



(ສພຊ) - ວັນທີ 29 ເມສາ 2025, ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ໄດ້ເດີນທາງໄປນະຄອນໂຮ່ຈິມິງ ເພື່ອກຽມເຂົ້າຮ່ວມພິທີສະເຫຼີມສະຫຼອງວັນປົດປ່ອຍພາກໃຕ້, ທ້ອນໂຮມປະເທດຊາດຫວຽດນາມເປັນເອກະພາບຄົບ

ອ່ານຕໍ່ໜ້າ 3



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ທີ່ປະຊາຊົນເຄົາລົບຮັກ

ໜ້າທີ່ດັດສ້າງແລະກໍ່ສ້າງເສດຖະກິດໃນໄລຍະໃໝ່ຂອງການປະຕິວັດປະເທດເຮົາ ແມ່ນກໍ່ສ້າງພື້ນຖານເສດຖະກິດທີ່ເປັນເອກະລາດ, ເປັນເຈົ້າຕົນເອງ ແລະ ສັງຄົມນິຍົມ.

(ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 119 ຂອງປະທານ ໄກສອນ ພົມວິຫານ)

ມີແຕ່ກໍ່ສ້າງປະເທດຊາດໃຫ້ມັ່ງຄັ່ງເຂັ້ມແຂງ, ເຮັດໃຫ້ປະຊາຊົນມີຄວາມສົມບູນພູນສຸກ ແລະ ຢູ່ດີກິນດີເທົ່ານັ້ນ ຈຶ່ງຈະເສີມຂະຫຍາຍນ້ຳໃຈຮັກບ້ານເກີດເມືອງນອນ ແລະ ຮັກປະເທດໄດ້ ຈຶ່ງຈະເຮັດໃຫ້ເຜົ່າຕ່າງໆ ຜູກພັນກັນຢ່າງແໜ້ນໜຽວໄດ້.

(ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 105 ຂອງປະທານ ໄກສອນ ພົມວິຫານ)

ອ່ານຕໍ່ສະບັບໜ້າ

## ປະທານສະພາແຫ່ງຊາດ ຢ້ຽມຢາມສູນຄົ້ນຄວ້າເຂົ້າ ແລະ ພືດເສດຖະກິດ



(ສພຊ) - ວັນເສົາທີ 26 ເມສາຜ່ານມາ, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ລົງຊຸກຍູ້ຕິດຕາມວຽກງານການສຶກສາຄົ້ນຄວ້າພັດທະນາແນວພັນເຂົ້າ, ແນວພັນພືດ ແລະ ການນຳໃຊ້ເຕັກນິກວິຊາການທີ່ມີປະສິດທິຜົນ ເພື່ອຍົກສະມັດຖະພາບການຜະລິດໃຫ້ສູງ

ອ່ານຕໍ່ໜ້າ 4

## ກວດກາເນື້ອໃນຮອບດ້ານຮ່າງກົດໝາຍສັງຄົມສົງເຄາະ

(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານຕໍ່ຮ່າງກົດໝາຍວ່າດ້ວຍສັງຄົມສົງເຄາະ (ສ້າງໃໝ່) ໄດ້ຈັດຂຶ້ນໃນວັນທີ 30 ເມສານີ້ ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ (ສພຊ); ເຂົ້າຮ່ວມມີບັນດາທ່ານປະທານ ແລະ ຮອງປະທານກຳ

ອ່ານຕໍ່ໜ້າ 4



## ຮັບສະມາຊິກສະມາຄົມມິດຕະພາບ ລາວ-ກຳປູເຈຍ ຂັ້ນສູນກາງ




ອ່ານຕໍ່ໜ້າ 8

## ສພຊ ເຜີຍແຜ່ເອກະສານສຳຄັນຂອງພັກ



(ສພຊ) - ຕອນບ່າຍວັນທີ 2 ພຶດສະພາຜ່ານມາ, ສະພາແຫ່ງຊາດ (ສພຊ) ໄດ້ມີພິທີເຜີຍແຜ່ບົດສະຫຼູບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະການປັບປຸງກົງຈັກການຈັດຕັ້ງ ປະຈຳປີ 2024 ແລະທິດທາງແຜນການປີ2025, ເຜີຍແຜ່ເອກະສານສຳຄັນຂອງພັກ, ປະກາດການແຕ່ງຕັ້ງ ແລະ ຍົກຍ້າຍຕຳແໜ່ງບໍລິຫານ ໂດຍການເປັນປະທານຂອງສະຫາຍຄຳໃບ ດຳລັດ ກຳມະການສູນກາງພັກ, ປະທານກວດກາພັກ-ລັດສະພາແຫ່ງຊາດ, ຮອງປະທານ

ອ່ານຕໍ່ໜ້າ 4



ສັບພະຄຸນໝາກຫວ້າ (ໜ້າ 9)


ປິດກອງປະຊຸມ... (ໜ້າ 10)


PAP ຊະນະເລືອກຕັ້ງ... (ໜ້າ 11)

ເຂົ້າໃຈ ໄດ້ຂີດຂຽນ ❖ ວິເສດ ສະແຫວງສຶກສາ
ນະໂຍບາຍ... (ໜ້າ 12)


## ຊົມເຊີຍວັນກຳມະກອນສາກົນ ຄົບຮອບ 139 ປີ (1/5/1886-1/5/2025) ຢ່າງສຸດໃຈ!

# ເລຂາທິການສະພາແຫ່ງຊາດ ພົບປະ ຢ້ຽມຢາມຜູ້ມີສິດເລືອກຕັ້ງຢູ່ເມືອງຊ່ອນ



(ສພຂ)-ວັນທີ28-30 ເມສາຜ່ານມາ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດ (ສພຊ) ຢູ່ເທດສະບານເມືອງ, ບ້ານຊ່ອນໃຕ້, ບ້ານໂງ່ນ ແລະ ບ້ານມົ້ນ ເມືອງຊ່ອນ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 423 ຄົນ, ຍິງ 213 ຄົນ.

ການເຄື່ອນໄຫວຄັ້ງນີ້ ໄດ້ຮັບຟັງການລາຍງານສະພາບທີ່ພົ້ນເດັ່ນຂອງເມືອງແລະບ້ານໂດຍສັງເຂບ. ຈາກນັ້ນ ໄດ້ນຳເອົາເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ8ຂອງ ສພຊ ຊຸດທີ IX ເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ສອງວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ທີ່ໄດ້ພິຈາລະນາຮັບຮອງເອົາລັດຖະທຳມະນູນ ປີ 2025, ກົງຈັກການຈັດຕັ້ງຂອງລັດຖະບານ, ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແລະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນ ໄດ້ຮັບຮູ້ແລະເຂົ້າໃຈຢ່າງເລິກເຊິ່ງ.

ນອກນັ້ນ, ກໍເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ໄດ້ສະເໜີຂໍ້ຂັດຂ້ອງໝອງໃຈ ແລະ ບັນຫາຕ່າງໆທີ່ຕິດພັນກັບການດຳລົງຊີວິດ ເຊິ່ງຍັງພົບຄວາມຫຍຸ້ງຍາກເພື່ອເປັນຂໍ້ມູນນຳໄປຄົ້ນຄວ້າ, ພິຈາລະນາ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຕາມຄວາມເໝາະສົມ; ພ້ອມນີ້, ກໍໄດ້ມີຄຳເຫັນອະທິບາຍ, ຊີ້ແຈງກັບທີ່ ໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ເຂົ້າໃຈແຈ້ງຕື່ມ. ໂອກາດດຽວກັນ, ຍັງໄດ້ເນັ້ນໜັກບາງບັນຫາ ໂດຍສະເພາະແມ່ນເພີ່ມທະວີການເຕົ້າໂຮມຄວາມສາມັກຄີເປັນເອກະພາບ, ຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ພ້ອມກັນຕ້ານ 3 ກະແສແນວຄິດຄື: ແນວຄິດຄອງເດີມ, ແນວຄິດຄັບແຄບ ແລະ ແນວຄິດເອື່ອຍອີງ, ສຸມໃສ່ພັດທະນາເສດຖະກິດ-ສັງຄົມໃຫ້ດີຂຶ້ນ, ເອົາໃຈໃສ່ປັບປຸງອົງການຈັດຕັ້ງບ້ານ ໃຫ້ມີຄວາມເຂັ້ມແຂງ, ເປັນເຈົ້າການຕ້ານ ແລະ ສະກັດກັ້ນບັນຫາປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນສັງຄົມໃຫ້ໝົດໄປ, ເອົາໃຈໃສ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນແລະການແກ້ໄຂບັນຫາຢາເສບຕິດ, ສືບຕໍ່ພັດທະນາເສດຖະກິດຄອບຄົວ ເຊັ່ນ: ການປູກຝັງ-ລ້ຽງສັດ, ການຕໍ່າຫູກທໍໄໝທີ່ເປັນມູນເຊື້ອ, ຜະລິດກະສິກຳເປັນສິນຄ້າສົ່ງອອກພາຍໃນແລະຕ່າງປະເທດ ເພື່ອແກ້ໄຂຊີວິດການເປັນຢູ່ຂອງຄອບຄົວໃຫ້ນັບມື້ດີຂຶ້ນ.

ໂອກາດນີ້ຍັງໄດ້ນຳເອົາຜ້າຫົ່ມ, ຄຸ, ຈົກ, ສຽມ ມອບໃຫ້ຄອບຄົວທີ່ຍັງທຸກຍາກພາຍໃນ 3 ບ້ານດັ່ງກ່າວ ພ້ອມທັງມອບບານເຕະ, ບານຕີ, ອຸປະກອນການຮຽນ ໃຫ້ໂຮງຮຽນ ແລະ ເງິນສົດຈຳນວນ 7 ລ້ານກີບ ມອບໃຫ້ບ້ານມົ້ນເພື່ອເປັນທຶນສ້ອມແປງເໝືອງຝາຍທີ່ເປ່ເພຈາກນ້ຳເຊາະເຈື່ອນລວມມູນຄ່າທັງໝົດ 26 ລ້ານກີບ.

# ປະກາດການແຕ່ງຕັ້ງປະທານ ແລະ ຮອງປະທານ ຄສຊ



(ສພຂ) - ວັນທີ 2 ພຶດສະພານີ້ ທີ່ຫ້ອງປະຊຸມຫ້ອງວ່າການແຂວງຫົວພັນ ໄດ້ຈັດພິທີປະກາດການແຕ່ງຕັ້ງປະທານ ແລະ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ8 ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ; ມີບັນດາທ່ານຄະນະປະຈຳພັກແຂວງ, ຮອງປະທານ ແລະ ຄະນະປະຈຳສະພາປະຊາຊົນແຂວງ (ສພຂ), ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ ແລະ ຮອງຫົວໜ້າພະແນກການ-ອົງການທຽບເທົ່າ, ແນວລາວສ້າງຊາດ, 3 ອົງການຈັດຕັ້ງມະຫາຊົນ, 2 ກອງບັນຊາການ, ແຂກຖືກເຊີນ ຕະຫຼອດຮອດພະນັກງານພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ສົມສັກ ດອນຈານິດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ໄດ້ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດສະບັບເລກທີ 104/ຄປຈ, ລົງວັນທີ 02/4/2025 ວ່າດ້ວຍການແຕ່ງຕັ້ງປະທານ ແລະ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເຊິ່ງໄດ້ແຕ່ງຕັ້ງທ່ານ ຄອນປະພັນ ເລືອງສີຈັນທອງ ເປັນປະທານ ແລະ ທ່ານ ສີຄຳ ບຸນມີໄຊ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ; ທັງນີ້, ເພື່ອປັບປຸງກົງຈັກການຈັດຕັ້ງພາຍໃນ ຄສຊ ປະຈຳເຂດເລືອກຕັ້ງທີ8 ໃຫ້ມີຄວາມເຂັ້ມແຂງດ້ານຄຸນນະພາບ, ຍົກສູງພາລະບົດບາດ, ຮັບປະກັນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ, ວຽກງານ ຄສຊ ໄດ້ເຄື່ອນໄຫວຕາມພາລະບົດບາດ ແລະ ສິດຂອງຕົນ ໃຫ້ມີຜົນສຳເລັດຕາມລັດຖະທຳມູນ ແລະ ກົດໝາຍກຳນົດໄວ້.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຜົນງານຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນຍາດໄດ້ໃນໄລຍະຜ່ານມາ ເຊິ່ງມີຜົນສຳເລັດໃນຫຼາຍດ້ານ ແລະ ຄຽງຄູ່ກັບດ້ານດີຜົນງານ, ທ່ານຍັງສະເໜີໃຫ້ຜູ້ທີ່ໄດ້ຮັບການແຕ່ງຕັ້ງໃໝ່ ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ຄຸນສົມບັດສິນທຳປະຕິວັດ ໃຫ້ແກ່ພະນັກງານ-ລັດຖະກອນຢູ່ຂົງເຂດຄວາມຮັບຜິດຊອບຂອງຕົນ; ສືບຕໍ່ເຮັດລ້ອນໜ້າທີ່ອັນມີກຽດສະຫງ່າທີ່ພັກ-ລັດ ແລະ ປະຊາຊົນມອບໝາຍ, ປະຕິບັດລະບອບແບບແຜນວິທີເຮັດວຽກ, ຮັກສາມູນເຊື້ອຄວາມສາມັກຄີພາຍໃນໜັກແໜ້ນ-ພາຍນອກກວ້າງຂວາງ ພ້ອມທັງເປັນແບບຢ່າງທີ່ດີ, ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຍົກລະດັບຄວາມຮູ້ຄວາມສາມາດ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງໃຫ້ສູງຂຶ້ນ, ປະຕິບັດສິດ ແລະ ໜ້າທີ່ ໃນນາມເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ໃຫ້ນັບມືນັບດີຂຶ້ນ.

# ຄະນະບໍລິຫານງານຊາວໜຸ່ມ ສພຊ ຢ້ຽມຊົມຫໍພິພິທະພັນ 2 ແຫ່ງ




(ສພຊ) - ວັນຈັນທີ 28 ເມສານີ້, ສະຫາຍ ໄກມະນີ ເທບບົວລີ ຮອງເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ (ສພຊ) ໄດ້ນຳພາສະມາຊິກຊາວໜຸ່ມ ຈຳນວນ 26 ສະຫາຍ ເຂົ້າຢ້ຽມຊົມຫໍພິພິທະພັນ ໄກສອນ ພົມວິຫານ ແລະ ຫໍພິພິທະພັນປ້ອງກັນຄວາມສະຫງົບປະຊາຊົນເພື່ອສ້າງຂະບວນການຂໍ່ານັບຮັບຕ້ອນການດຳເນີນກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມສະພາແຫ່ງຊາດ ສະໄໝທີ V ທັງເຮັດໃຫ້ພະນັກງານ ກໍຄືສະມາຊິກຊາວໜຸ່ມສພຊ ມີຈິດສຳນຶກນ້ຳໃຈຮັກຊາດ, ສ້າງຄວາມເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງພັກ-ລັດດ້ານການຈັດຕັ້ງແຕ່ລະຂັ້ນ, ຕັ້ງໜ້າເຝິກຝົນຫຼໍ່ຫຼອມ, ຊອກຮູ້ຮໍ່າຮຽນຮອບດ້ານ, ຮຽນຮູ້ມູນເຊື້ອຂອງຊາດ ຂອງພັກຂອງລັດເພື່ອທັນເຂົ້າແບບແຜນວິທີເຮັດວຽກ, ແບບແຜນການດຳລົງຊີວິດ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບພຶດຕິກຳຕົວຈິງ ເພື່ອເຮັດສຳເລັດໜ້າທີ່ການເມືອງຂອງຕົນ.

ການເຂົ້າຢ້ຽມຊົມຫໍພິພິທະພັນທັງສອງແຫ່ງ, ຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ໄດ້ນຳເອົາກະຕ່າດອກໄມ້ນ້ອມຂໍ່ານັບຕໍ່ໜ້າຮູບຫຼໍ່ຂອງປະທານ ໄກສອນ ພົມວິຫານ ເພື່ອສະແດງຄວາມເຄົາລົບຮັກ, ກະຕັນຍູຮູ້ບຸນຄຸນຢ່າງສູງຕໍ່ຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງຂອງປະທານ ໄກສອນພົມວິຫານທີ່ໄດ້ສ້າງໄວ້ໃຫ້ການຈັດຕັ້ງພັກ-ລັດ ແລະ ຄົນຮຸ່ນສືບທອດໄດ້ສຶກສາຄົ້ນຄວ້າຮໍ່າຮຽນ; ຈາກນັ້ນ, ຄະນະໄດ້ທ່ຽວຊົມຮູບພາບ ແລະ ຮູບເງົາ ພ້ອມທັງຟັງການບັນລະຍາຍປະຫວັດການຕໍ່ສູ້ກູ້ຊາດແລະເຕີບໃຫຍ່ຂະຫຍາຍຕົວຂອງຕຳຫຼວດ ນັບແຕ່ອະດີດຈົນຮອດປັດຈຸບັນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**








## ຄະນະຜູ້ແທນຂັ້ນສູງ...

(ຕໍ່ຈາກໜ້າ 1)

ປະຊາຊົນປະຕິວັດລາວ, ປະທານປະເທດພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງພັກ-ລັດ ໄດ້ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນປົດປ່ອຍພາກໃຕ້, ທ້ອນໂຮມປະເທດຊາດຫວຽດນາມເປັນເອກະພາບຄົບຮອບ50ປີ(30/4/1975-30/4/2025) ຢູ່ນະຄອນໂຮ່ຈິມິງ ສສ.ຫວຽດນາມ.

ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດ,ປະທານປະເທດ, ລັດຖະບານ ແລະ ແນວໂຮມປະເທດຊາດຫວຽດນາມ ໄດ້ຈັດພິທີດັ່ງກ່າວຂຶ້ນ ໂດຍມີສະຫາຍ ໂຕ ເລິມ, ສະຫາຍ ເລືອງ ເກື່ອງ ປະທານປະເທດ, ສະຫາຍ ຟ້າມ ມິງ ຈິງ ນາຍົກລັດຖະມົນຕີ, ສະຫາຍ ເຈິ່ນ ແທັງ ເໝິນ ປະທານສະພາແຫ່ງຊາດ, ສະຫາຍ ໂດ໊ ວັນ ຈຽນ ປະທານສູນກາງແນວໂຮມປະເທດຊາດ ພ້ອມດ້ວຍບັນດາສະຫາຍການນຳ, ອະດີດການນຳຂັ້ນສູງພັກ-ລັດ ສສ.ຫວຽດນາມ, ແຂກພາຍໃນ ແລະ ຕ່າງປະເທດຈຳນວນຫຼາຍຄະນະ ໄດ້ເຂົ້າຮ່ວມ; ສຳລັບຄະນະຜູ້ແທນຈາກ ສປປລາວ, ນອກຈາກຄະນະຜູ້ແທນຈາກສູນກາງແລ້ວຍັງມີຄະນະຜູ້ແທນຈາກກະຊວງປ້ອງກັນປະເທດ, ນະຄອນຫຼວງວຽງຈັນ, ແຂວງຈຳປາສັກ, ແຂວງສະຫວັນນະເຂດ ແລະ ແຂວງຫົວພັນ ເຂົ້າຮ່ວມ.

ການຈັດພິທີສະເຫຼີມສະຫຼອງໃນຄັ້ງນີ້ ເປັນການຈັດພິທີລະດັບຊາດ ໂດຍມີການສວນສະໜາມຢູ່ຖະໜົນ ເລ ຢວັ້ນ - ທຳນຽບເອກະລາດ, ນະຄອນໂຮ່ຈິມິງເຊິ່ງມີກ້ອນກຳລັງຕ່າງໆເຂົ້າຮ່ວມສວນສະໜາມຫຼາຍກວ່າ 13 ພັນຄົນ; ໃນນັ້ນ, ມີກ້ອນກຳລັງຂອງກອງທັບປະຊາຊົນລາວ ແລະ ກ້ອນກຳລັງຈາກປະເທດອື່ນເຊັ່ນ: ກອງທັບປົດປ່ອຍປະຊາຊົນຈີນ ແລະ ກອງທັບລາຊະອານາຈັກກຳປູເຈຍ ເຂົ້າຮ່ວມສວນສະໜາມ. ນອກນັ້ນ, ໃນພິທີຍັງມີການຍິງປືນໃຫຍ່ 21 ນັດ; ພ້ອມດຽວກັນນັ້ນ, ກໍມີເຮືອບິນ ເອເລັກ ຈຳນວນ 13 ລຳ, Yal-130 ຈຳນວນ 9 ລຳ ແລະ Su-30MK2 ຈຳນວນ 7 ລຳ ຂອງກອງທັບອາກາດຫວຽດນາມ ເຂົ້າຮ່ວມບິນສວນສະໜາມ ຊົມເຊີຍເທິງນ່ານຟ້າຂອງນະຄອນໂຮ່ຈິມິງ.

ໃນໂອກາດນີ້, ສະຫາຍ ທອງລຸນ ສີສຸລິດ ພ້ອມດ້ວຍການນຳຂັ້ນສູງພັກ-ລັດສປປລາວ ໄດ້ພົບປະກັບສະຫາຍເລຂາທິການໃຫຍ່ໂຕເລິມ ແລະສະຫາຍນາຍົກລັດຖະມົນຕີຟ້າມ ມິງຈິງ ແລະ ເຂົ້າຮ່ວມພິທີປະດັບການຍ້ອງຍໍຫຼຽນໄຊຈາກລັດຖະບານ ສປປລາວ ໃຫ້ແກ່ຮອງປະທານປະເທດແລະອະດີດຮອງປະທານປະເທດຂອງຫວຽດນາມ ທີ່ໄດ້ມີບັນດາຜົນງານດີເດັ່ນໃນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມແລະເຂົ້າຮ່ວມງານລ້ຽງຕ້ອນຮັບຈັດໂດຍສະຫາຍປະທານປະເທດເລືອງເກື່ອງ; ນອກນັ້ນ, ຍັງພົບປະກັບຄະນະຜູ້ແທນຂັ້ນສູງຂອງ ສ.ກູບາ ນຳໂດຍສະຫາຍ ຊານບາດໍຣ ບານເດັສ ເມຊາ ກຳມະການກົມການເມືອງສູນກາງພັກກອມມູນິດກູບາ, ຮອງປະທານປະເທດ ທີ່ເດີນທາງມາຮ່ວມພິທີສະເຫຼີມສະຫຼອງວັນປົດປ່ອຍພາກໃຕ້, ທ້ອນໂຮມປະເທດຊາດຫວຽດນາມເປັນເອກະພາບ ຄົບຮອບ 50 ປີ ເຊັ່ນດຽວກັນ.

**(ຂ່າວ: ຄະນະພົວພັນຕ່າງປະເທດສູນກາງພັກ, ພາບ: ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ໜັງສືພິມຜູ້ແທນປະຊາຊົນຫວຽດນາມ)**

## 2 ເລຂາທິການ...

(ຕໍ່ຈາກໜ້າ 1)

ຮອບ 50 ປີ ທີ່ຈະຈັດຂຶ້ນໃນວັນທີ 30 ເມສານີ້.

ໂອກາດດັ່ງກ່າວ, ສະຫາຍ ທອງລຸນ ສີສຸລິດ ໄດ້ພົບປະກັບສະຫາຍ ໂຕ ເລິມ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໂດຍໄດ້ສະແດງຄວາມຂອບໃຈຕໍ່ການເຊື້ອເຊີນ ແລະ ຕ້ອນຮັບອັນອົບອຸ່ນ, ສະໜິດສະໜົມ ແລະ ສົມກຽດ ເຊິ່ງເຕັມໄປດ້ວຍໄມຕີຈິດມິດຕະພາບ, ຄວາມສາມັກຄີພິເສດຖານສະຫາຍອ້າຍນ້ອງ ທີ່ສະຫາຍ ໂຕ ເລິມ ແລະ ບັນດາສະຫາຍການນຳຫວຽດນາມ ກໍຄືຄະນະພັກ, ອຳນາດການປົກຄອງ ແລະ ປະຊາຊົນຊາວນະຄອນໂຮ່ຈິມິງ ທີ່ມີຕໍ່ຄະນະ; ສະແດງຄວາມຊົມເຊີຍຕໍ່ພັກ, ລັດ ແລະປະຊາຊົນຫວຽດນາມ ເນື່ອງໃນໂອກາດສະເຫຼີມສະຫຼອງວັນປົດປ່ອຍພາກໃຕ້, ທ້ອນໂຮມປະເທດຊາດຫວຽດນາມເປັນເອກະພາບ ຄົບຮອບ 50 ປີ. ພ້ອມນີ້, ຍັງໄດ້ພ້ອມກັນແລກປ່ຽນບັນຫາພາກພື້ນ ແລະ ສາກົນ ທີ່ສອງຝ່າຍໃຫ້ຄວາມສົນໃຈ, ແຈ້ງໃຫ້ກັນຊາບສະພາບພົ້ນເດັ່ນຂອງແຕ່ລະພັກ, ແຕ່ລະປະເທດໃນໄລຍະຜ່ານມາ, ແລກປ່ຽນຄຳຄິດຄຳເຫັນກ່ຽວກັບການພົວພັນຮ່ວມມືສອງຝ່າຍໃນຕໍ່ໜ້າ ແລະຕີລາຄາສູງຕໍ່ສາຍພົວພັນຮ່ວມມືຂອງສອງປະເທດ ທີ່ສືບຕໍ່ມີການຂະຫຍາຍຕົວຂຶ້ນສູ່ລະດັບສູງກວ່າເກົ່າ; ການຮ່ວມມືດ້ານການເມືອງສືບຕໍ່ມີຄວາມໜັກແໜ້ນ, ໝັ້ນທ່ຽງ, ນັບມື້ນັບໃກ້ຊິດສະໜິດສະໜົມ ສ້າງໄດ້ຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນໃນລະດັບສູງສຸດ; ການຮ່ວມມືດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດນັບມື້ນັບໄດ້ຮັບການເສີມຂະຫຍາຍຢ່າງມີປະສິດທິຜົນ; ການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ, ເຕັກໂນໂລຊີ, ວັດທະນະທຳ-ສັງຄົມ ແລະ ສຶກສາ ນັບມື້ນັບໄດ້ຮັບການເພີ່ມທະວີແລະນຳຜົນປະໂຫຍດຢ່າງເປັນຮູບປະທຳມາສູ່ປະຊາຊົນສອງຊາດໄດ້ເປັນຢ່າງດີ.

ສະຫາຍ ທອງລຸນ ສີສຸລິດ ຍັງໄດ້ພົບປະກັບສະຫາຍຟ້າມ ມິງ ຈິງ ນາຍົກລັດຖະມົນຕີຫວຽດນາມ ໂດຍສະຫາຍໄດ້ສະແດງຄວາມຊົມເຊີຍເນື່ອງໃນໂອກາດສະເຫຼີມສະຫຼອງວັນປົດປ່ອຍພາກໃຕ້, ທ້ອນໂຮມປະເທດຊາດຫວຽດນາມເປັນເອກະພາບ ຄົບຮອບ 50 ປີ; ພ້ອມທັງເນັ້ນໜັກວ່າ ມະຫາໄຊຊະນະລະດູບານໃໝ່ໃນບັ້ນຮົບໂຮ່ຈິມິງທີ່ລືຊື່ ເມື່ອວັນທີ 30 ເມສາ 1975 ເປັນໄຊຊະນະທີ່ຍິ່ງໃຫຍ່ສະຫວ່າງສະໄຫວ, ມີຄວາມໝາຍປະຫວັດສາດ, ເປັນໝາກຜົນຂອງການນຳພາອັນຖືກຕ້ອງ ແລະສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ, ສາມາດປົດປ່ອຍປະເທດຊາດໄດ້ຢ່າງສົມບູນ ແລະ ສຳເລັດພາລະກຳໃນການທ້ອນໂຮມປະເທດຫວຽດນາມໃຫ້ເປັນອັນໜຶ່ງອັນດຽວ ເຊິ່ງເປັນຂີດໝາຍປະຫວັດສາດ, ກ້າວເຂົ້າສູ່ສັງກາດໃໝ່ແຫ່ງຄວາມເປັນເອກະລາດແຫ່ງຊາດ ຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມ. ໄຊຊະນະດັ່ງກ່າວ ແມ່ນໝາກຜົນຂອງຄວາມສາມັກຄີແລະຮ່ວມສຳພັນສູ້ຮົບຂອງປະຊາຊົນ 3 ຊາດອິນດູຈີນແລະໄດ້ກາຍເປັນກຳລັງແຮງອັນມະຫາສານຊຸກຍູ້ຂະບວນການຕໍ່ສູ້ປົດປ່ອຍຊາດຂອງປະຊາຊົນລາວບັນດາເຜົ່າ, ສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ກໍຄືເປັນກຳລັງແຮງສະໜັບສະໜູນຢ່າງແຮງກ້າ ໃຫ້ແກ່ບັນດາຂະບວນການຕໍ່ສູ້ທີ່ຮັກຫອມສັນຕິພາບໃນໂລກ.

ໃນວັນດຽວກັນ,ສະຫາຍ ທອງລຸນ ສີສຸລິດ ພ້ອມດ້ວຍຄະນະ ຍັງໄດ້ເຂົ້າຮ່ວມພິທີປະດັບການຍ້ອງຍໍຫຼຽນໄຊຈາກລັດຖະບານ ສປປລາວ ໃຫ້ແກ່ການນຳແລະອະດີດການນຳຂັ້ນສູງຂອງຫວຽດນາມ ທີ່ໄດ້ມີບັນດາຜົນງານດີເດັ່ນໃນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ.

**(ຂ່າວ-ພາບ: ຄະນະພົວພັນຕ່າງປະເທດສູນກາງພັກ)**

# ມອບ-ຮັບເງິນຊຸກຍູ້ກອງປະຊຸມສະໄໝວິສາມັນເທື່ອທີ 2




(ສພຊ) - ວັນທີ 29 ເມສານີ້, ທ່ານ ດຣ. ນາງ ວິພາວັນ ພົມວິຫານປະທານກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ (ສພຊ) ໄດ້ຮັບການເງິນຊ່ວຍເຫຼືອຈາກທະນາຄານ ພົງສະຫວັນ ຈຳກັດ ທີ່ມອບໃຫ້ແກ່ສະພາແຫ່ງຊາດ ເພື່ອປະກອບສ່ວນຊຸກຍູ້ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ເມື່ອເດືອນມີນາຜ່ານມາ ລວມມູນຄ່າ 200 ລ້ານກີບ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ຈາກນັ້ນ, ທ່ານປອ. ອາຄົມປຣະເສີດຮອງເລຂາທິການສະພາແຫ່ງຊາດ ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ແລະສະໜັບສະໜູນຄັ້ງນີ້.

**(ນາງ ອາລິນ ສຸພົມມະປະດິດ)**

# ຮອງປະທານ ກວສຊ ເຄື່ອນໄຫວວຽກງານຢູ່ເມືອງໂຂງ ແລະ ເມືອງສຸຂຸມາ

(ສພຂ)-ວັນທີ 24-25 ເມສາຜ່ານມາ, ທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ແລະ ທ່ານ ສົມສີ ມະນີນິນ ຮອງປະທານສະພາປະຊາຊົນແຂວງຈຳປາສັກ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະແລະເຮັດວຽກກັບຄະນະພັກແລະອົງການປົກຄອງເມືອງໂຂງ ແລະ ເມືອງສຸຂຸມາ ເພື່ອເກັບກຳຂໍ້ມູນ ແລະ ປຶກສາຫາລືກ່ຽວກັບວຽກງານການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ.



ໂອກາດນີ້, ເລຂາຄະນະບໍລິຫານງານພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງໂຂງ ແລະ ເມືອງສຸຂຸມາ ໄດ້ລາຍງານກ່ຽວກັບໂຄງປະກອບການຈັດຕັ້ງ, ບຸກຄະລາກອນ ແລະ ວຽກງານການກະກຽມການເລືອກຕັ້ງ ພ້ອມທັງສະເໜີບາງບັນຫາທີ່ຖອດຖອນບົດຮຽນໄດ້ຈາກການຈັດຕັ້ງປະຕິບັດວຽກງານຕົວຈິງໃນໄລຍະຜ່ານມາ; ຈາກນັ້ນ, ກໍໄດ້ມີການປະກອບຄຳເຫັນຕໍ່ບາງບັນຫາ ເພື່ອແລກປ່ຽນບົດຮຽນເຊິ່ງກັນແລະກັນ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າມີຄວາມສະດວກ, ວອງໄວ, ທັນເວລາ, ຖືກຕ້ອງຕາມລະບຽບຫຼັກການ ແລະ ກົດໝາຍກຳນົດໄວ້.

ທ່ານ ຄຳສິງ ໄຊສົມແພງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບ ແລະ ລາຍງານຂໍ້ມູນທີ່ເປັນປະໂຫຍດ, ຕໍ່ກັບຂໍ້ມູນດັ່ງກ່າວ ກອງເລຂາໄດ້ບັນທຶກສັງລວມຢ່າງລະອຽດ ເພື່ອຈະນຳໄປລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າພິຈາລະນາໃນຂັ້ນຕໍ່ໄປ.

**(ສົມວິຈິດ ໄຊມົນຕີ)**



## ປະທານ...

(ຕໍ່ຈາກໜ້າ 1)

ຂຶ້ນ ທີ່ສູນຄົ້ນຄວ້າເຂົ້າ ແລະ ພືດເສດຖະກິດ (ນາພອກ) ຂອງສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໂດຍການຕ້ອນຮັບຂອງທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຫົວໜ້າຫ້ອງການກະຊວງ, ຫົວໜ້າ-ຮອງຫົວໜ້າກົມ, ສູນວິຊາການຂັ້ນສອງ.

ໃນການລົງຊຸກຍູ້ຕິດຕາມວຽກງານຄັ້ງນີ້, ໄດ້ຢ້ຽມຢາມແປງສາທິດແນວພັນເຂົ້າຈ້າວ TS25 ແລະ ແປງທົດລອງແນວພັນເຂົ້າອື່ນໆຂອງສູນ, ທະນາຄານເຊື້ອພັນພືດ, ຫ້ອງຂະຫຍາຍພັນພືດດ້ວຍເນື້ອເຍື່ອ, ຫ້ອງທົດລອງດ້ານໂມເລກູນ (DNA) ແລະ ຫ້ອງທົດລອງພະຍາດແມງໄມ້ສັດຕູພືດ, ສາງເຢັນເກັບຮັກສາເມັດພັນພືດ ແລະ ຄັງແຮແນວພັນເຂົ້າ, ສູນທົດລອງແນວພັນພືດທີ່ດີຮ່ວມມືລາວ-ຈີນ(ກວາງຊີ) ແລະ ຢ້ຽມຊົມການປູກພືດໃນເຮືອນຮົ່ມທັນສະໄໝ; ຈາກນັ້ນ, ໄດ້ສືບຕໍ່ຢ້ຽມຢາມຫໍພິພິທະພັນດິນແລະຫ້ອງຂໍ້ມູນຂ່າວສານດິນກະສິກຳ ທີ່ຂຶ້ນກັບກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ.



## ກອດກາ...

(ຕໍ່ຈາກໜ້າ 1)

ມາທິການທີ່ກ່ຽວຂ້ອງຂອງສພຊ, ຮອງລັດຖະມົນຕີກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ.

ທ່ານ ນາງ ແກ້ວ ຈັນທະວິໄຊ ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຮສສ) ໄດ້ສະເໜີໂດຍຫຍໍ້ກ່ຽວກັບເຫດຜົນແລະຄວາມຈຳເປັນຂອງການສ້າງກົດໝາຍວ່າດ້ວຍສັງຄົມສົງເຄາະໂດຍໃຫ້ຮູ້ວ່າ: ໃນໄລຍະຜ່ານມາ, ການໃຫ້ການຊ່ວຍເຫຼືອ, ການບໍລິການທາງດ້ານວັດຖຸ, ຈິດໃຈ ແລະ ການພັດທະນາ ຕໍ່ປະຊາຊົນກຸ່ມເປົ້າໝາຍສັງຄົມສົງເຄາະ ຍັງບໍ່ທັນຕອບສະໜອງກັບຄວາມຕ້ອງການໃນການດຳລົງຊີວິດທີ່ຈຳເປັນຂັ້ນພື້ນຖານ; ກົນໄກການປະສານງານ, ຄວາມຮັບຜິດຊອບຂອງຂະແໜງການ ແລະ ທ້ອງຖິ່ນ ລວມທັງການມີສ່ວນຮ່ວມຂອງສັງຄົມໃນວຽກສັງຄົມສົງເຄາະຍັງຈຳກັດ, ບໍ່ລວມສູນເຮັດໃຫ້ການຕິດຕາມ-ຄຸ້ມຄອງການຊ່ວຍເຫຼືອສັງຄົມສົງເຄາະ ຍັງບໍ່ເປັນລະບົບ. ພ້ອມກັນນັ້ນ, ການຊ່ວຍເຫຼືອ, ການບໍລິການຕ່າງໆຕໍ່ປະຊາຊົນກຸ່ມເປົ້າໝາຍ ຍັງແມ່ນລັກສະນະໃຫ້ການຊ່ວຍເຫຼືອບັນເທົາທຸກສຸກເສີນເທົ່ານັ້ນ ສ່ວນດ້ານການບໍລິການ ແລະ ການພັດທະນາເປົ້າໝາຍດ້ວຍການໃຫ້ຄຳປຶກສາ, ຄຳແນະນຳທັກສະການດຳລົງຊີວິດ ໃນເວລາທີ່ມີການປະເຊີນກັບບັນຫາຕ່າງໆທີ່ເກີດຂຶ້ນແມ່ນຍັງເຮັດໄດ້ໜ້ອຍ ອັນເນື່ອງຈາກນັກວິຊາການ ລວມທັງຄວາມເຂົ້າໃຈຂອງສັງຄົມ ແລະ ການສະໜອງງົບປະມານເຂົ້າໃສ່ວຽກສັງຄົມສົງເຄາະນີ້ ຍັງຈຳກັດ.

ທ່ານຮອງລັດຖະມົນຕີກະຊວງຮສສ ໃຫ້ຮູ້ອີກວ່າ: ຫາກກົດໝາຍສະບັບນີ້ຖືກຮັບຮອງ ແລະ ປະກາດໃຊ້ ຈະເຮັດໃຫ້ມີເຄື່ອງມືການຄຸ້ມຄອງວຽກສັງຄົມສົງເຄາະ ທີ່ມີຜົນບັງຄັບໃຊ້ທົ່ວໄປຢ່າງໜັກແໜ້ນ ທັງເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກສັງຄົມສົງເຄາະຢູ່ພາຍໃນ ແລະ ສອດຄ່ອງກັບມາດຕະຖານຂອງພາກພື້ນ ແລະ ສາກົນ; ບັນດາອົງການຈັດຕັ້ງລັດ, ອົງການປົກຄອງທ້ອງຖິ່ນ, ພາກສ່ວນທີ່ເຄື່ອນໄຫວວຽກງານສັງຄົມສົງເຄາະ, ກຸ່ມເປົ້າໝາຍສັງຄົມສົງເຄາະ ມີຄວາມເຂົ້າໃຈ ແລະ ມີສ່ວນຮ່ວມໃນວຽກນີ້ຫຼາຍຂຶ້ນ; ການຈັດສັນງົບປະມານທີ່ເປັນໝາກຜົນຂອງການພັດທະນາເຂົ້າໃນວຽກງານສັງຄົມສົງເຄາະເປັນລະບົບກວ່າເກົ່າ ເຊິ່ງຈະເຮັດໃຫ້ກຸ່ມເປົ້າໝາຍໄດ້ຮັບການພັດທະນາຢ່າງເປັນລະບົບ ແລະ ມີຄວາມຍືນຍົງ ທັງສ້າງຄວາມເຊື່ອໝັ້ນໃຫ້ອົງການຈັດຕັ້ງສາກົນ ຕໍ່ລະບົບປົກປ້ອງສັງຄົມ ກໍຄືວຽກງານສັງຄົມສົງເຄາະ, ການຮຽນ-ການສອນໃນການສ້າງນັກສັງຄົມສົງເຄາະດີຂຶ້ນ.

ບັນດາຜູ້ເຂົ້າຮ່ວມໄດ້ເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຕໍ່ບັນດາເນື້ອໃນຮ່າງກົດໝາຍສະບັບນີ້ຢ່າງມີຈຸດສຸມ, ມີລັກສະນະຫຼັກການ ຕິດພັນກັບການຈັດຕັ້ງປະຕິບັດຕົວຈິງ ແລະ ມີຄຳເຫັນລົງເລິກແຕ່ລະພາກ, ໝວດ, ມາດຕາ ໃນນັ້ນ, ມີຫຼາຍເນື້ອໃນຂອງຫຼາຍມາດຕາ ໄດ້ຮັບການປັບປຸງໃຫ້ມີຄວາມຄົບຖ້ວນ, ຮັດກຸມ ແລະ ຊັດເຈນກວ່າເກົ່າ.

**(ນາງ ກຸກກິກ ບຸດດາໄຊ)**



## ສພຊ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ; ມີບັນດາສະຫາຍຄະນະປະຈຳ ແລະ ຄະນະບໍລິຫານງານພັກ, ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ, ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກສົມບູນ ແລະ ສຳຮອງ ພາຍໃນ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ໄດ້ຮັບຟັງຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນສະບັບເລກທີ28/ຄຈສພ, ລົງວັນທີ 14 ກຸມພາ 2025; ຜ່ານບັນດາເນື້ອໃນທີ່ສຳຄັນຂອງກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານ ແລະ ວຽກງານປັບປຸງກົງຈັກການຈັດຕັ້ງປະຈຳປີ 2024 ແລະ ທິດທາງໜ້າທີ່ປີ 2025 (ຄັດຈ້ອນຈາກບົດສະຫຼຸບວຽກງານຈັດຕັ້ງທົ່ວປະເທດ ສະບັບເລກທີ 178/ຄຈສພ, ລົງວັນທີ 18 ມີນາ 2025); ບົດສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານແລະການປັບປຸງກົງ ຈັກການຈັດຕັ້ງປະຈຳປີ 2024 ແລະ ວາງທິດທາງແຜນການປີ 2025 ຂອງສະພາແຫ່ງຊາດ. ພ້ອມກັນນັ້ນ, ກໍໄດ້ຜ່ານມະຕິ ແລະ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ, ຍົກຍ້າຍຕຳແໜ່ງບໍລິຫານປະເພດຕ່າງໆຈຳນວນໜຶ່ງພາຍໃນ ສພຊ.

ໂອກາດນີ້, ສະຫາຍ ຄຳໃບ ດຳລັດ ໄດ້ມີຄຳເຫັນແລກປ່ຽນ ໂດຍເນັ້ນໜັກໃຫ້ຄະນະບໍລິຫານງານພັກສະພາແຫ່ງຊາດທີ່ນຳພາຢູ່ແຕ່ລະຂົງເຂດ, ບັນດາຮາກຖານພັກ ຈະຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ມີຄວາມເຂົ້າໃຈຕໍ່ສະພາບການ, ມີຄວາມອົດທົນ, ມີຄວາມເປັນເອກະພາບຕໍ່ແນວທາງນະໂຍບາຍຂອງພັກແລະເປັນເຈົ້າການເຂົ້າຮ່ວມແກ້ໄຂບັນຫາຕ່າງໆໃຫ້ບັນລຸຜົນສຳເລັດ; ຈຳແນກໄດ້ເລ່ຫຼ່ຽມ, ການໂຄສະນາບິດເບືອນຂອງຄົນບໍ່ດີທີ່ຫວັງມ້າງເພທຳລາຍ, ສ້າງຄວາມແຕກແຍກພາຍໃນພວກເຮົາ. ພ້ອມກັນນັ້ນ, ກໍຄວນເອົາໃຈໃສ່ປະຕິບັດມາດຕະການຕ່າງໆ ໃນສະພາບຫຍຸ້ງຍາກແນວນີ້ເປັນຕົ້ນການປະຢັດມັດທະຍັດ, ຊ່ວຍເຫຼືອເຊິ່ງກັນແລະກັນພາຍໃນພະນັກງານ-ລັດຖະກອນ ໂດຍສະເພາະຜູ້ທີ່ມີຄວາມຫຍຸ້ງຍາກແທ້ ເຊິ່ງບັນຫານີ້ ຄະນະພັກ, ຄະນະປະຈຳສະພາແຫ່ງຊາດ ໄດ້ຊີ້ນຳອົງການຊ່ວຍວຽກຂອງຄະນະພັກ ສພຊ ແລ້ວ. ປັດຈຸບັນ, ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ຊີ້ນຳການຈັດຕັ້ງຜັນຂະຫຍາຍຕາມທິດຂອງມະຕິຄະນະບໍລິຫານງານສູນກາງພັກວ່າດ້ວຍການປັບປຸງກົງຈັກການຈັດຕັ້ງສະບັບເລກທີ03/ຄບສພ ເຊິ່ງໄດ້ຊີ້ນຳຄະນະປັບປຸງກົງຈັກການຈັດຕັ້ງຂອງ ສພຊ ຄົ້ນຄວ້າການໂຮມກົງຈັກພາຍໃນ ສພຊ ລວມທັງເກັບກຳບຸກຄະລາກອນ, ການຮ່າງນິຕິກຳການຈັດຕັ້ງ ແລະ ເຄື່ອນໄຫວຂອງກົງຈັກ ແລະ ອື່ນໆ ເພື່ອຮອງຮັບໃຫ້ ສພຊ ຊຸດທີ X; ສະນັ້ນ, ສະເໜີຄະນະນຳຂອງກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳ ໃຫ້ການຮ່ວມມືສະໜັບສະໜູນ, ຄົ້ນຄວ້າ, ປຶກສາຫາລືເພື່ອສ້າງຄວາມເປັນເອກະພາບ ໃຫ້ສຳເລັດໃນ ສພຊ ຊຸດທີ IX. ສະເໜີບັນດາກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳພ້ອມພະນັກງານພາຍໃນສະພາແຫ່ງຊາດ ຈົ່ງຊຸ່ມຊ່ຽວກະກຽມວຽກງານທີ່ຢູ່ໃນຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ເຊິ່ງຄາດຄະເນຈະຈັດຂຶ້ນໃນເດືອນມິຖຸນານີ້ ມີຜົນສຳເລັດຈົບງາມ. ເພື່ອເຮັດໃຫ້ວຽກງານການກະກຽມເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ III ດຳເນີນໄປສອດຄ່ອງກັບກົດໝາຍ ແລະ ຮັບປະກັນຕາມທິດຊີ້ນຳຂອງກົມການເມືອງສູນກາງພັກ ທັງໄດ້ຕາມຄາດໝາຍທີ່ຄະນະປະຈຳສະພາແຫ່ງຊາດກຳນົດໄວ້ນັ້ນ, ສະເໜີໃຫ້ພາກສ່ວນກ່ຽວຂ້ອງເອົາໃຈໃສ່ຮີບຮ້ອນຄົ້ນຄວ້າສ້າງເອກະສານທີ່ກ່ຽວຂ້ອງ ເພື່ອຂໍທິດຊີ້ນຳຈາກກົມການເມືອງສູນກາງພັກ ແລະ ບັນດາເອກະສານທີ່ຮັບໃຊ້ໃຫ້ແກ່ການເລືອກຕັ້ງຄັ້ງນີ້ລວມທັງການເກັບກຳ ແລະ ຂຶ້ນບັນຊີອຸປະກອນຮັບໃຊ້ການເລືອກຕັ້ງໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້. ໃຫ້ບັນດາໜ່ວຍພັກຮາກຖານ, ໜ່ວຍພັກ ກະກຽມການສະຫຼຸບວຽກງານໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ວຽກງານຮັກຊາດພັດທະນາ, ວຽກງານຍ້ອງຍໍ ແລະ ອື່ນໆ ໃຫ້ສຳເລັດກ່ອນເດືອນຕຸລາ 2025; ຫຼັງຈາກນັ້ນ, ຄະນະຮັບຜິດຊອບຈະຄົ້ນຄວ້າແລະສະເໜີຂັ້ນເທິງພິຈາລະນາຕົກລົງ ຈັດຕັ້ງປະຕິບັດໃຫ້ທັນກັບສະພາບການ.

ພ້ອມນັ້ນ, ສະຫາຍຮອງປະທານສະພາແຫ່ງຊາດ ຍັງສະແດງຄວາມຊົມເຊີຍບັນດາສະຫາຍທີ່ໄດ້ເລື່ອນຕຳແໜ່ງໃໝ່ ເຊິ່ງລ້ວນແລ້ວແຕ່ແມ່ນຜູ້ທີ່ມີເງື່ອນໄຂມາດຕະຖານຄົບຖ້ວນ, ແມ່ນຜູ້ທີ່ໄດ້ຮັບຄວາມເຊື່ອໝັ້ນ, ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ທັງເນັ້ນໜັກໃຫ້ສະຫາຍທີ່ໄດ້ເລື່ອນຕຳແໜ່ງໃໝ່ ຈົ່ງປະກອບສ່ວນທຸ່ມເທເຫື່ອແຮງ, ສະຕິປັນຍາ, ເຮັດວຽກຢ່າງບໍ່ຮູ້ອິດຮູ້ເມື່ອຍ ເພື່ອປະຕິບັດໜ້າທີ່ວຽກງານທີ່ຕົນຮັບຜິດຊອບດ້ວຍຄຸນນະພາບ, ຊ່ວຍເຮັດໃຫ້ກົງຈັກທີ່ຕົນສັງກັດມີຜົນສຳເລັດ; ສ່ວນການຍົກຍ້າຍໄປປະຕິບັດໜ້າທີ່ໃໝ່ກໍຄືການໝູນວຽນສັບປ່ຽນໜ້າທີ່, ການດຳລົງຕຳແໜ່ງຈາກບ່ອນເກົ່າໄປຮັບຜິດຊອບໜ້າທີ່ໃໝ່ຕາມຄວາມຮຽກຮ້ອງຂອງໜ້າທີ່ການເມືອງ, ເພື່ອສ້າງເງື່ອນໄຂໃຫ້ພະນັກງານໄດ້ເຝິກຝົນ, ທົດສອບໃນພຶດຕິກຳຕົວຈິງຢ່າງຮອບດ້ານ, ມີຄວາມຊຳນານງານ, ສ້າງຖັນແຖວພະນັກງານໃຫ້ສົມຄູ່ກັບໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ, ເຮັດໜ້າທີ່ໃຫ້ການຈັດຕັ້ງຢູ່ແຕ່ລະຂັ້ນແລະຂະແໜງການຕ່າງໆ ມີສະຖຽນລະພາບ, ມີການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີປະສິດທິພາບ.

**(ນາງ ອາລີນ ສຸພົມມະປະດິດ)**

# ປະທານ ສປນວ ຢ້ຽມຢາມ ແລະ ຊີ້ນຳ ວຽກງານຢູ່ເຂດພັດທະນາກວມລວມໄຊເຊດຖາ



(ສພຊ) - ວັນທີ 8 ເມສາຜ່ານມາ, ທ່ານ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະພັກ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ພ້ອມດ້ວຍຄະນະ ໄດ້ລົງຢ້ຽມຢາມ ແລະ ຊີ້ນຳວຽກງານຢູ່ເຂດພັດທະນາກວມລວມໄຊເຊດຖາ ໂດຍການຕ້ອນຮັບຂອງທ່ານ ທະນົງໄຊ ຄຸດໄພທູນ ຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດນະຄອນຫຼວງວຽງຈັນ, ທ່ານ ຊົງຈູນ ຜູ້ອຳນວຍການບໍລິສັດ ຮ່ວມທຶນ ລາວ-ຈີນ ຈຳກັດ ພ້ອມດ້ວຍຕົວ ແທນຂອງບໍລິສັດທີ່ລົງທຶນໃນເຂດ.

ໂອກາດນີ້, ທ່ານ ອະນຸພາບ ຕຸນາລົມ ໄດ້ເຂົ້າຢ້ຽມຊົມບໍລິສັດ ເປເຕົ້ເຄື່ອງນຸ່ງ (ລາວ) ຈຳກັດ, ບໍລິສັດ ຈ່ຽງຊູ ຈິງຫຼຸ້ນເຕັກໂນໂລຊີ(ລາວ)ຈຳກັດແລະບໍລິສັດອື່ນໆ ເພື່ອເບິ່ງສະພາບການຜະລິດ, ການຈ້າງງານແລະແຜນການຂະຫຍາຍການລົງທຶນຂອງບໍລິສັດໃນອະນາຄົດ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍ ແລະ ຕີລາຄາສູງຕໍ່ບັນດາບໍລິສັດທີ່ ມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມແລະການສ້າງວຽກເຮັດງານທຳໃຫ້ປະຊາຊົນລາວ.

ຈາກນັ້ນ, ໄດ້ມີການຈັດກອງປະຊຸມເພື່ອຮັບຟັງການລາຍງານກ່ຽວກັບການດຳເນີນງານຂອງເຂດພັດທະນາ ເຊິ່ງໄດ້ແບ່ງເປັນ 3 ໄລຍະ ຄື: ໄລຍະທີ 1 ພັດທະນາ 400 ເຮັກຕາ ໂດຍພັດທະນາອຸດສາຫະກຳການຜະລິດ; ໄລຍະທີ 2 ແລະ 3 ແມ່ນພັດທະນາເປັນເຂດການຄ້າ, ການທ່ອງທ່ຽວ ແລະ ພະຍາຍາມສ້າງເປັນຕົວເມືອງໃໝ່ຂອງນະຄອນຫຼວງ ວຽງຈັນ. ປັດຈຸບັນ, ມີວິສາຫະກິດ 160 ຫົວໜ່ວຍ ໄດ້ເຂົ້າລົງທຶນຢູ່ເຂດພັດທະນາກວມລວມໄຊເຊດຖາ, ໃນນີ້ 88 ຫົວໜ່ວຍ ສ້າງສຳເລັດ ແລະ ເລີ່ມການຜະລິດ; ຄາດວ່າຖ້າວິສາຫະກິດທັງໝົດ 160 ຫົວໜ່ວຍເລີ່ມດຳເນີນການຜະລິດ, ມູນຄ່າການຜະລິດຕໍ່ປີຈະບັນລຸເຖິງ 3 ຕື້ໂດລາສະຫະລັດ ແລະ ຈະສາມາດສ້າງວຽກເຮັດງານທຳໄດ້ປະມານ 17 ພັນກວ່າຕຳແໜ່ງງານ. ນອກຈາກນີ້, ຍັງໄດ້ຮັບຟັງຂໍ້ສະເໜີ ແລະ ຂໍ້ຄິດເຫັນຈາກບັນດາບໍລິສັດທີ່ເຂົ້າມາລົງທຶນຢູ່ເຂດ ພັດທະນາກວມລວມໄຊເຊດຖາ.

ທ່ານ ອານຸພາບ ຕຸນາລົມ ມີຄຳເຫັນວ່າ: ເຂດພັດທະນາກວມລວມໄຊເຊດຖາເປັນໂຄງການຮ່ວມມືລະດັບຊາດ ທີ່ລັດຖະບານສອງປະເທດ ລາວ-ຈີນ ໄດ້ກຳນົດຮ່ວມກັນ ທັງເປັນເຂດຮ່ວມມືເສດຖະກິດການຄ້າລະດັບຊາດ ຂອງ ສປຈີນ ໜຶ່ງດຽວຢູ່ສປປລາວແລະເປັນໂຄງການທຳອິດທີ່ໄດ້ຈັດເຂົ້າໃນແຜນຍຸດທະສາດ ໜຶ່ງແລວໜຶ່ງເສັ້ນທາງທີ່ໄດ້ຮັບຄວາມເອົາໃຈໃສ່ ແລະສະໜັບສະໜູນຈາກລັດຖະບານທັງສອງປະເທດ; ພ້ອມດຽວກັນ, ທ່ານໄດ້ມີທິດຊີ້ນຳ ໃຫ້ເຂດພັດທະນາ ສືບຕໍ່ເອົາໃຈໃສ່ປັບປຸງລະບົບການບໍລິການ, ປັບປຸງສະພາບແວດລ້ອມການລົງທຶນໃຫ້ດີຂຶ້ນກວ່າເກົ່າ ເພື່ອສ້າງເງື່ອນໄຂດຶງດູດບໍລິສັດທີ່ມີສັກກະຍະພາບ ແລະ ນຳໃຊ້ເຕັກໂນໂລຊີຂັ້ນສູງມາລົງທຶນຢູ່ເຂດພັດທະນາກວມລວມໄຊເຊດຖາໃນອະນາຄົດໃຫ້ຫຼາຍຂຶ້ນກວ່າເກົ່າ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຜະລິດພາຍໃນ, ສາມາດຕອບສະໜອງການຊົມໃຊ້ຢູ່ພາຍໃນ ແລະ ເປັນສິນຄ້າສົ່ງອອກເພື່ອດຶງເອົາເງິນຕາເຂົ້າປະເທດ, ປະກອບສ່ວນສຳຄັນເຂົ້າໃນ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ-ເງິນຕາໃນປັດຈຸບັນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບເສດຖະກິດແຫ່ງຊາດໃນຕໍ່ໜ້າ.

(VientianeNewday/ວຽງຈັນໃໝ່)

# ຄປຈສພຂ ອຸດົມໄຊ ປະຊຸມ ປະຈຳເດືອນເມສາ ແລະ ມອບລົດຖີບ



(ສພຂ) - ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ອຸດົມໄຊ ປະຈຳເດືອນເມສາ 2025 ໄດ້ຈັດຂຶ້ນເມື່ອວັນອັງຄານທີ 29 ເມສາຜ່ານມາ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານ ຄປຈ ສພຂ ເຊິ່ງກອງປະຊຸມໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນເມສາ ແລະ ວາງທິດທາງແຜນການປະຈຳເດືອນພຶດສະພາ2025ຂອງຄະນະປະຈຳສະພາປະຊາຊົນແຂວງ, ຜ່ານຮ່າງແຜນການກະກຽມດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຂ ຊຸດທີ II ແລະ ປຶກສາຫາລືວຽກງານພົ້ນເດັ່ນຂອງສະພາປະຊາຊົນແຂວງຈຳນວນໜຶ່ງ.

ໃນວັນດຽວກັນ, ທ່ານ ຄຳມະນີ ໄຊດວງຕາ ຄະນະປະຈຳສະພາປະຊາຊົນແຂວງ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4 ໄດ້ມອບລົດຖີບ ຈຳນວນ 6 ຄັນ ໃຫ້ແກ່ນັກຮຽນທີ່ທຸກຍາກ ແລະ ດ້ອຍໂອກາດ ຢູ່ ໂຮງຮຽນ ມສ ດອນໄຊ ເມືອງໄຊ.

# ຕິດຕາມຊຸກຍູ້ໂຄງການກໍ່ສ້າງໄຟຟ້າພະລັງງານແສງຕາເວັນ ຕິດພັນກັບການກໍ່ສ້າງເສັ້ນທາງຄົມມະນາຄົມຢູ່ເມືອງໄຊ ແລະ ເມືອງນາໝໍ້



(ສພຂ) - ວັນທີ 31 ມີນາ - 4 ເມສາຜ່ານມາ, ຄະນະປະຈຳສະພາປະຊາຊົນແຂວງອຸດົມໄຊ ນຳໂດຍທ່ານ ຄຳມະນີ ໄຊດວງຕາ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4 ໄດ້ລົງເຄື່ອນໄຫວຕິດຕາມຊຸກຍູ້ໂຄງການກໍ່ສ້າງ ໄຟຟ້າພະລັງງານແສງຕາເວັນ ຕິດພັນກັບການກໍ່ສ້າງເສັ້ນທາງຄົມມະນາຄົມ ຢູ່ເມືອງໄຊ ແລະ ເມືອງນາໝໍ້ ເຊິ່ງມີຮອງ ເຈົ້າເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂຄງການກໍ່ສ້າງໄຟຟ້າພະລັງງານແສງຕາເວັນ ຢູ່ເມືອງໄຊ ແລະ ເມືອງນາໝໍ້ ກວມເອົາ 7 ບ້ານ ມີດິນທີ່ຖືກຜົນກະທົບຈາກໂຄງການ 1,009 ຕອນ ເນື້ອທີ່ 2,090.13 ເຮັກຕາ, ໃນເນື້ອທີ່ດິນດັ່ງກ່າວ ຈະຕ້ອງທົດແທນຄ່າເສຍຫາຍ 956 ຕອນ ກວມເນື້ອທີ່ 2,022.91 ເຮັກຕາ ມີ 349 ຄອບຄົວ ແລະ ດິນລວມຂອງບ້ານ (ດິນລັດ) 53 ຕອນ ກວມ ເນື້ອທີ່ 67,22 ເຮັກຕາ; ຜົນກະທົບທັງໝົດ, ທາງບໍລິສັດ ຊີຈີເອັນ ເອເນີຈີ (ລາວ) ຈຳກັດ ເປັນບໍລິສັດທີ່ສຳປະທານ ໂຄງການ ໄດ້ທົດແທນຄ່າເສຍຫາຍສຳເລັດແລ້ວ 100%. ຄວາມຄືບໜ້າໃນການກໍ່ສ້າງໂຄງການ, ປັດຈຸບັນມີບໍລິສັດທີ່ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ(MOU) ກັບລັດຖະບານ ເພື່ອສຶກສາຄວາມເປັນໄປໄດ້ໃນການພັດທະນາ ຈຳນວນ 5 ບໍລິສັດ ມີ 7 ໂຄງການ (ຢູ່ຂັ້ນຕອນການປະຕິບັດ MOU 3 ໂຄງການ, ສັນຍາພັດທະນາໂຄງການ (PDA) 3 ໂຄງການ ແລະ ສັນຍາສຳປະທານ (XA) 1 ໂຄງການ); ໄດ້ບຸກເບີກເສັ້ນທາງເຂົ້າເຂດຕິດຕັ້ງແຜງໂຊລາເຊວແລະຕິດຕັ້ງແຜງໂຊລາເຊວຈຳນວນໜຶ່ງ.

ສຳລັບໂຄງການກໍ່ສ້າງ, ປັບປຸງແລະຍົກລະດັບເສັ້ນທາງ: ປັດຈຸບັນ, ເມືອງໄຊ ມີໂຄງການຟື້ນຟູສ້ອມແປງເສັ້ນທາງຫຼວງທ້ອງຖິ່ນ3ເສັ້ນລວງຍາວ37.5 ກມ, ໂຄງການສ້ອມແປງເສັ້ນທາງເທດສະບານ 6 ເສັ້ນ ລວງຍາວ 4.04 ກມ, ໂຄງການປູຢາງ 2 ຊັ້ນ (4 ແຍກໜອງແມງດາ ຫາ 4 ແຍກໂຮງຮຽນເຕັກນິກວິຊາຊີບ), ໂຄງການປູຢາງຈາກບ້ານ ດອນແກ້ວ ຫາ ບ້ານແຝນລວງຍາວ2.75ກມ, ໂຄງການປັບປຸງສ້ອມແປງທາງເທດສະບານເມືອງໄຊ (ທາງເບຕົງເສີມເຫຼັກ) ເລກທີ 1914 ແຕ່ 4 ແຍກວົງວຽນກະສິກຳຫາ4ແຍກສະໂມສອນແຂວງ ບ້ານເຈງ; ເມືອງນາໝໍ້ ມີ 1 ໂຄງການ ຄືຄງການຂະຫຍາຍທາງຫຼວງແຫ່ງຊາດ, ກໍ່ຮ່ອງລະບາຍນ້ຳຜ່ານເທດສະບານເມືອງ.

ໃນການລົງເຄື່ອນໄຫວຄັ້ງນີ້, ຄະນະໄດ້ລົງເບິ່ງພື້ນທີ່ໂຄງການຕົວຈິງ ເພື່ອສືບຕໍ່ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໂຄງການ ຕິດພັນກັບການພົບປະໂອ້ລົມປະຊາຊົນຢູ່ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການດັ່ງກ່າວ ເປັນຕົ້ນ ແມ່ນຮັບຟັງບັນດາທາງສຽງສັງຄົມ, ຜົນກະທົບຕໍ່ຊີວິດການເປັນຢູ່ ແລະ ບັນດາຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດໂຄງການຂອງບໍລິສັດຮັບເໝົາເພື່ອເກັບກຳຂໍ້ມູນສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງນຳໄປແກ້ໄຂຕາມພາລະບົດບາດ.



# ຖອດຖອນບົດຮຽນການກະກຽມດຳເນີນກອງປະຊຸມ ສະໄໝສາມັນເທື່ອທີ 8 ແລະ ການພົບປະຜູ້ມີສິດເລືອກຕັ້ງ



(ສພຂ) - ວັນທີ 24 ເມສາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ມີກອງປະຊຸມສະຫຼຸບຖອດຖອນບົດຮຽນການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ແລະ ການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະພະນັກງານພາຍໃນ ສພຂ.

ກອງປະຊຸມໄດ້ຜ່ານຮ່າງບົດສະຫຼຸບຖອດຖອນບົດຮຽນການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8, ການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເຊິ່ງບົດສະຫຼຸບດັ່ງກ່າວ ໄດ້ສະແດງອອກດ້ານດີຜົນງານທີ່ຍາດມາໄດ້ເປັນຕົ້ນ: ໄດ້ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຊຸດທີ II ດ້ວຍຜົນສຳເລັດຢ່າງຈົບງາມ ໃນລະຫວ່າງວັນທີ 14-15 ມັງກອນ 2025 ເຊິ່ງແຕ່ລະອະນຸກຳມະການ ໄດ້ເອົາໃຈໃສ່ ຢ່າງຕັ້ງໜ້າໃນການປະຕິບັດໜ້າທີ່ຂອງຕົນ ແລະ ປະສານສົມທົບກັບບັນດາພະແນກການ, ອົງການ ເພື່ອໃຫ້ຄວາມຮ່ວມມື, ການສະໜອງຂໍ້ມູນ, ຮ່າງບົດລາຍງານຕ່າງໆ ເພື່ອເຂົ້າຜ່ານກອງປະຊຸມໄດ້ສຳເລັດ; ພ້ອມນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ສຳເລັດການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມຢູ່7ເມືອງ ແລະ ອ້ອມຂ້າງແຂວງ ໄດ້ 114 ຈຸດ, ມີຜູ້ເຂົ້າຮ່ວມທັງໝົດ 9,805 ຄົນ ເປັນຍິງ 3,982 ຄົນ. ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນ, ແລກປ່ຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ເພື່ອເຫັນໄດ້ສາເຫດທີ່ພາໃຫ້ມີດ້ານດີ, ຂໍ້ຄົງຄ້າງ ເພື່ອຊອກຫາວິທີທາງແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນການກະກຽມກອງປະຊຸມ ແລະ ລົງເຄື່ອນໄຫວພົບປະປະຊາຊົນຄັ້ງຕໍ່ໄປ ໃຫ້ໄດ້ຮັບຜົນສຳເລັດດີກວ່າເກົ່າ.

ທ່ານ ຄຳດີ ວົງລ້ອມ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະນຳ ແລະ ພະນັກງານທຸກຄົນທີ່ໄດ້ສຸມໃສ່ໃນການກະກຽມ, ເອົາໃຈໃສ່ປະສານງານກັບອົງການປົກຄອງແຂວງ, ບັນດາພະແນກການ ແລະອົງການທີ່ກ່ຽວຂ້ອງ ເຫັນວ່າເຮັດໄດ້ດີ ເຊິ່ງສາມາດນຳເອົາເນື້ອໃນຕ່າງໆ ເຂົ້າຜ່ານໃນກອງປະຊຸມເພື່ອໃຫ້ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຄົ້ນຄວ້າ, ພິຈາລະນາຮັບຮອງເອົາ; ການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມກໍສຳເລັດຜົນຕາມລະດັບຄາດໝາຍແລະແຜນການທີ່ວາງໄວ້.

# ຍົກສູງຄວາມສາມາດໃຫ້ພະນັກງານ ຂະແໜງການພາຍໃນ ສພຂ ຄຳມ່ວນ



(ສພຂ) - ວັນທີ 29 ເມສາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດກອງປະຊຸມເຝິກອົບຮົມວຽກງານໄອທີ, ວຽກງານສື່ມວນຊົນ ແລະ ວຽກງານເລຂານຸການ, ພິທີການ ແລະ ມາລະຍາດສັງຄົມ ໂດຍການເປັນປະທານຂອງທ່ານ ສະເຫຼີມສັກ ແກ້ວຈັນທະລາ ເລຂາທິການສະພາປະຊາຊົນແຂວງ; ມີຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນ ພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮຽນຮູ້ກ່ຽວກັບການເຂົ້າເຖິງການນຳໃຊ້ລະບົບ G-Share, G-Drive ຂອງພາກລັດ, ການສ້າງຄິວອາໂຄດ (QR Code); ວຽກງານສື່ມວນຊົນ; ວຽກງານເລຂານຸການ, ພິທີການແລະມາລະຍາດສັງຄົມ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ແລກປ່ຽນປະກອບຄຳຄິດຄຳເຫັນ, ຈັດແບ່ງກຸ່ມເຝິກຫັດຕົວຈິງໃນການນຳໃຊ້ເຂົ້າລະບົບ, ລົງທະບຽນສະໝັກເຂົ້ານຳໃຊ້ເຄືອຂ່າຍ, ທົດລອງນຳໃຊ້ຕົວຈິງໃນການເຂົ້າລະບົບ, ການຂຽນບົດຂ່າວແລະເກັບກຳຮູບພາບເພື່ອສ້າງຄວາມເຂົ້າໃຈຢ່າງຈະແຈ້ງ ແລະ ສາມາດນຳໃຊ້ໄດ້ຢ່າງຄ່ອງຕົວ; ພ້ອມທັງໄດ້ມີການກວດແກ້, ສົນທະນາຖາມ-ຕອບແລະແລກປ່ຽນຄຳຄິດຄຳເຫັນໃນຫົວຂໍ້ທີ່ມີຄວາມສົນໃຈ.

ທ່ານ ສະເຫຼີມສັກ ແກ້ວຈັນທະລາ ກ່າວວ່າ; ການເຝິກອົບຮົມຄັ້ງນີ້ ແມ່ນເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ພັດທະນາທາງດ້ານວິຊາການ ໃຫ້ທ່ວງທັນກັບສະພາບໃນໄລຍະໃໝ່ ທັງເປັນການຍົກສູງຄຸນນະພາບຂອງວຽກງານຮອບດ້ານໃນການໂຄສະນາເຜີຍແຜ່ການເຄື່ອນໄຫວວຽກງານຂອງອົງການນິຕິບັນຍັດຂັ້ນທ້ອງຖິ່ນ ເປັນຕົ້ນການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງ ໃຫ້ບັນດາອົງການຈັດຕັ້ງຂັ້ນແຂວງ, ຂັ້ນເມືອງ ແລະ ມວນຊົນ ຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງ; ພ້ອມກັນນັ້ນ, ທ່ານຍັງຮຽກຮ້ອງໃຫ້ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ, ມີຄວາມອົດທົນເສຍສະຫຼະ ດຸໝັ່ນ ບຸກບືນ, ເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ມີສະຕິປະຕິບັດກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ, ມີມະນຸດສຳພັນດີໃນການປະສານງານ, ການປະ ຕິບັດວຽກງານຄ່ອງແຄ້ວ ນິ້ມນວນ ວ່ອງໄວ ຊັດເຈນ, ບໍ່ສວຍໃຊ້ໜ້າທີ່ຕຳແໜ່ງສະແຫວງຫາຜົນປະໂຫຍດ, ເອົາໃຈໃສ່ຈັດຕັ້ງປະຕິບັດລະບອບແບບແຜນວິທີເຮັດວຽກ ແລະ ຍົກສູງຄຸນນະພາບໃນການປະສານງານ.

**(ເອື້ອ ມະໂນສິງ)**




# ຊຸກຍູ້ສົ່ງເສີມກຸ່ມລ້ຽງໝູບ້ານໂພນໂຮມ ແລະ ການປູກເຂົ້າເປັນສິນຄ້າບ້ານນາສະຫວັນໃຕ້



(ສພຂ) - ຕອນບ່າຍວັນທີ 22 ເມສາຜ່ານມາ, ທ່ານ ສຸວັນນີ ໄຊຊະນະ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 11, ປະທານສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ພ້ອມດ້ວຍຄະນະ ໄດ້ລົງຊຸກຍູ້ສົ່ງເສີມກຸ່ມລ້ຽງໝູບ້ານໂພນໂຮມແລະການປູກເຂົ້າເປັນສິນຄ້າບ້ານນາສະຫວັນໃຕ້ເມືອງປາກຊັນ ໂຄງການຂອງສະພາການຄ້າແລະອຸດສາຫະກຳແຂວງ ໂດຍການຕ້ອນຮັບຂອງທ່ານ ແສງອາລຸນ ແສງອາພອນ ເລຂາພັກເມືອງ, ເຈົ້າເມືອງປາກຊັນ ແລະທ່ານ ໄຊຍະເພັດ ຈັນທິສອນ ປະທານສະພາການຄ້າ ແລະອຸດສາຫະກຳແຂວງ; ເຂົ້າຮ່ວມມີຕາງໜ້າພະແນກການທີ່ກ່ຽວຂ້ອງຂອງແຂວງ ແລະ ຫ້ອງການທີ່ກ່ຽວຂ້ອງຂອງເມືອງ ພ້ອມດ້ວຍກຸ່ມລ້ຽງໝູບ້ານໂພນໂຮມ.

ທ່ານ ຄຳພັນ ສິດທິເດດ ນາຍບ້ານໆໂພນໂຮມ ທັງເປັນຫົວໜ້າກຸ່ມລ້ຽງໝູ ໄດ້ລາຍງານໃຫ້ຮູ້ວ່າ: ເພື່ອຊອກຫາວິທີແກ້ໄຂຊີວິດການເປັນຢູ່ຂອງຄອບຄົວ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ, ສະພາການຄ້າ ແລະ ອຸດສາຫະກຳແຂວງ ໄດ້ມີແນວຄິດລິເລີ່ມຊອກຫາແຫຼ່ງທຶນມາໃຫ້ພໍ່ແມ່ປະຊາຊົນບ້ານໂພນໂຮມ ລ້ຽງໝູເປັນສິນຄ້າໂດຍສົມທົບກັບກອງຜະລິດກະສິກຳເລກ 1 ໜອງໝາກຈັບ ກະຊວງປ້ອງກັນປະເທດ ໄດ້ຈັດເຝິກອົບຮົມເຕັກນິກການລ້ຽງໝູຂຸນ ໃຫ້ກຸ່ມລ້ຽງບ້ານໂພນໂຮມ ເພື່ອເປັນການຍົກລະດັບຄວາມຮູ້ຈາກຊ່ຽວຊານ ສສ. ຫວຽດນາມ ແລະ ວິຊາການຈາກກອງຜະລິດກະສິກຳເລກ1 ໜອງໝາກຈັບ ທີ່ມີຄວາມຮູ້ ແລະ ປະສົບການ ເຊິ່ງຜ່ານມາທາງສະພາການຄ້າ ແລະ ອຸດສາຫະກຳແຂວງ ໄດ້ນຳເອົາໝູປ່າຈຳນວນ 53 ໂຕ ໃຫ້ກຸ່ມລ້ຽງໝູບ້ານໂພນໂຮມ ເພື່ອສົ່ງເສີມໃຫ້ລ້ຽງ ແລະ ຈຳໜ່າຍລູກໝູນ້ອຍ ລວມມີ 2 ກຸ່ມ ມີ 10 ຄອບຄົວ ລວມມູນຄ່າ 168 ລ້ານກວ່າກີບ; ປັດຈຸບັນ, ກຸ່ມລ້ຽງໝູຢູ່ບ້ານໂພນໂຮມ ມີທັງໝົດ 22 ຄອບຄົວ ມີໝູທັງໝົດ 564 ໂຕ ໃນນັ້ນ ພໍ່ພັນ 6 ໂຕ ແມ່ພັນ 70 ໂຕ.

ຈາກນັ້ນ, ຄະນະໄດ້ໄປຕິດຕາມສະພາບການຕົວຈິງຂອງໂຄງການປູກເຂົ້າເປັນສິນຄ້າຂອງສະພາການຄ້າ ແລະ ອຸດສາຫະກຳແຂວງ ຢູ່ບ້ານນາສະຫວັນໃຕ້ ເຊິ່ງມີເນື້ອທີ່ທັງໝົດ 75 ເຮັກຕາ ແຕ່ປະຕິບັດຕົວຈິງໄດ້ 53 ເຮັກຕາ ໂດຍໃຊ້ແນວພັນເຂົ້າທ່າດອກຄຳ 8 ເຫັນວ່າການປູກເຂົ້າແມ່ນໄດ້ຮັບຜົນຕາມລະດັບຄາດໝາຍ, ມີພໍ່ແມ່ປະຊາຊົນໃຫ້ຄວາມສົນໃຈ; ສຳລັບກຸ່ມປູກເຂົ້າເປັນສິນຄ້າກຸ່ມບ້ານເປົ້າໝາຍຂອງສະພາການຄ້າ ແລະ ອຸດສາຫະກຳແຂວງ ມີທັງໝົດ 6 ບ້ານ ໃນປີ 2025 ຄື: ບົວແວງຄຳ, ໂພນສະອາດ, ໂພນໂຮມ, ນາຫົວພູ, ນາສົມມໍ ແລະ ນາສະຫວັນ.

ກ່ອນໜ້ານັ້ນ, ທ່ານ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ຮອງປະທານປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ ພ້ອມດ້ວຍຄະນະ ໄດ້ໄປພົບປະຢ້ຽມຢາມແລະອວຍພອນຄະນະພັກ, ຄະນະບັນຊາ, ນາຍ ແລະ ພົນ ຕຳຫຼວດ ກອງບັນຊາການ ປກສ ແຂວງ ເນື່ອງໃນໂອກາດຂ່ຳນັບຮັບຕ້ອນ, ຊົມເຊີຍວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ຄົບຮອບ 64 ປີ (5/4/1961-5/4/2025) ໂດຍການຕ້ອນຮັບຢ່າງອົບອຸ່ນຈາກທ່ານ ພົຈວ. ກົງຈັນ ໄຊປັນຍາ ກຳມະການພັກແຂວງ, ຫົວໜ້າກອງບັນຊາການ ປກສ ແຂວງ.

**(ລະອອງດາວ)**

# ຄປຈສພຂ, ຄສຊ ເຂດເລືອກຕັ້ງທີ 14 ສະຫຼຸບວຽກງານເດືອນເມສາ ແລະ ເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 2




(ສພຂ) - ວັນທີ 22 ເມສາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໄດ້ເປີດກອງປະຊຸມສອງວາລະ ສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນເມສາ ແລະ ທິດທາງແຜນການປະຈຳເດືອນພຶດສະພາ 2025 ຂອງຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ແລະຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ14 ໂດຍການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14, ປະທານຄະນະປະຈຳສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານຮອງປະທານ ແລະ ກຳມະການ ຄປຈສພຂ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14, ຄະນະກຳມະການ, ຄະນະເລຂາທິການ ແລະ ຫົວໜ້າ-ຮອງຫົວໜ້າຂະແໜງ.

ໃນທີ່ປະຊຸມ ໄດ້ຮັບຟັງການຜ່ານເນື້ອໃນຮ່າງບົດສະຫຼຸບການເຄື່ອນໄຫວວຽກງານທີ່ສະແດງໃຫ້ເຫັນຜົນສຳເລັດພົ້ນເດັ່ນປະຈຳເດືອນເມສາ ຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ເປັນຕົ້ນ: ສຳເລັດການຊຸກຍູ້ການປະກາດໃຊ້ນິຕິກຳທີ່ສຳຄັນຂອງແຂວງຄື ຂໍ້ຕົກລົງວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນທົ່ວແຂວງສາລະວັນ (ສະບັບປັບປຸງ), ອອກມະຕິຂອງຄະນະປະຈຳສະພາປະຊາຊົນແຂວງວ່າດ້ວຍແຜນຈັດສັນນຳໃຊ້ເງິນບຳເນັດລາຍຮັບເກີນແຜນຂອງແຂວງປີ2024, ເປີດກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປຶກສາຫາລືກ່ຽວກັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ 1 ເລື່ອງ, ເຄື່ອນໄຫວມອບເຄື່ອງຊ່ວຍເຫຼືອອຸປະໂພກ ແລະ ບໍລິໂພກລວມມູນຄ່າ29ລ້ານກວ່າກີບໃຫ້ປະຊາຊົນເມືອງສາລະວັນ ແລະ ເມືອງລະຄອນເພັງ ທີ່ຖືກຜົນກະທົບຈາກພະຍຸລະດູຮ້ອນ, ຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໃຫ້ພະນັກງານ-ລັດຖະກອນພາຍໃນແຂວງ ແລະ ວຽກອື່ນໆ ໂດຍລວມສ່ອງແສງໃຫ້ເຫັນຄວາມເປັນເຈົ້າການບຸກບືນເອົາໃຈໃສ່ຊີ້ນຳ-ນຳພາວຽກງານຮອບດ້ານຂອງ ຄປຈສພຂ ແລະ ຄສຊ ປະຈຳເຂດເລືອກຕັ້ງທີ 14 ທີ່ມີຄວາມສາມັກຄີເປັນເອກະພາບພາຍໃນ ຈຶ່ງເຮັດໃຫ້ວຽກງານຫຼາຍດ້ານມີຜົນສຳເລັດ, ມີການກຳນົດແຜນການເຄື່ອນໄຫວວຽກງານເປັນລະບົບຕໍ່ເນື່ອງໃນແຕ່ລະເດືອນຢ່າງລະອຽດ, ມີລະບອບການສ່ອງແສງລາຍງານປົກກະຕິ.

ປະທານກອງປະຊຸມໄດ້ເປີດກວ້າງໃຫ້ຜູ້ເຂົ້າຮ່ວມ ໄດ້ປຶກສາຫາລືຢ່າງເປັນເຈົ້າການ ຕິດພັນກັບການປະຕິບັດໜ້າທີ່ການເມືອງຂອງຕົນທີ່ໄດ້ຮັບຜິດຊອບ ເພື່ອປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບໃຫ້ມີເນື້ອໃນຄົບຖ້ວນ ແລະ ສົມບູນ; ພ້ອມດຽວກັນ, ກໍໄດ້ກຳນົດແຜນວຽກສຳຄັນທີ່ຈະສືບຕໍ່ເຄື່ອນໄຫວໃນເດືອນພຶດສະພາ ເປັນຕົ້ນ: ຮັບຮອງເອົາມະຕິວ່າດ້ວຍການຮັບຮອງເອົາແຜນຈັດສັນນຳໃຊ້ເງິນເກັບລາຍຮັບເກີນແຜນຂອງປີ 2024, ກະກຽມແຜນເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 2 ຢູ່ບັນດາເມືອງ, ຊຸກຍູ້ 3 ເມືອງທີ່ບໍ່ທັນອອກມະຕິຂອງສະພາປະຊາຊົນແຂວງ ເພື່ອຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປະຈຳປີ 2024 ແລະ ແຜນການປະຈຳປີ 2025 ໃຫ້ສຳເລັດ, ກະກຽມແຕ່ຫົວທີໃນບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ III.

ວັນທີ 29-30 ເມສາ, ທ່ານ ສີເຮັງ ຫອມສົມບັດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ 3 ເມືອງຄື: ຕະໂອ້ຍ, ສະໝ້ວຍ ແລະຕຸ້ມລານ ຕິດພັນກັບການໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊຊຸດທີIX; ໂດຍການຕ້ອນຮັບຂອງຄະນະນຳອົງການປົກຄອງເມືອງ, ສສຂ ປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການອ້ອມຂ້າງເມືອງ, ທະຫານ-ຕຳຫຼວດ, ອົງການຈັດຕັ້ງມະຫາຊົນຕະຫຼອດຮອດພະນັກງານ-ລັດຖະກອນ ເຂົ້າຮ່ວມ 400 ກວ່າທ່ານ.

ຫຼັງຈາກສຳເລັດການເຜີຍແຜ່, ກໍໄດ້ສົນທະນາແລກປ່ຽນກ່ຽວກັບກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແລະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບປັບປຸງປີ 2025, ບາງຂໍ້ສະເໜີກ່ຽວກັບບັນຫາພື້ນຖານໂຄງລ່າງເສັ້ນທາງເປ່ເພ, ໄຟຟ້າ, ວຽກງານການສຶກສາ, ປາກົດການຫຍໍ້ທໍ້ ແລະ ອື່ນໆ ເຊິ່ງບາງບັນຫາໄດ້ຕອບອະທິບາຍຊີ້ແຈງກັບທີ່, ບາງບັນຫາທີ່ຕິດພັນກັບຫຼາຍພາກສ່ວນ ແມ່ນໄດ້ສັງລວມຂໍ້ສະເໜີສົ່ງໃຫ້ອົງການປົກຄອງແຂວງເພື່ອຄົ້ນຄວ້າຫາວິທີທາງແກ້ໄຂໃຫ້ສຳເລັດໂດຍໄວ; ທ່ານ ສີເຮັງ ຫອມສົມບັດ ຍັງໄດ້ມີຄຳເຫັນໂອ້ລົມ ໂດຍຮຽກຮ້ອງທຸກຂັ້ນພາຍໃນເມືອງ ຈົ່ງພ້ອມກັນຜັນຂະຫຍາຍເນື້ອໃນຈິດໃຈຂອງມະຕິກອງປະຊຸມສະໄໝວິສາມັນຄັ້ງນີ້ ເຂົ້າໃນການປະຕິບັດວຽກງານຕົວຈິງຂອງແຕ່ລະພາກສ່ວນໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**(ດີລຳພົນ ພົມມະຈັນ)**

# ຜູ້ປະສົບເຄາະຮ້າຍຈາກອັກຄີໄພ ຢູ່ບ້ານຕະລຸຍ ໄດ້ຮັບການຊ່ວຍເຫຼືອ



(ສພຂ) - ວັນທີ 17 ເມສາຜ່ານມາ, ທ່ານ ດົງເພັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາສະຊາຊົນແຂວງ (ສພຂ) ເຊກອງ ພ້ອມດ້ວຍເຈົ້າເມືອງກະລຶມ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ພາກສ່ວນກ່ຽວຂ້ອງ ໄດ້ຕາງໜ້າໃຫ້ຄະນະພັກ-ອົງການປົກຄອງແຂວງ ກໍຄືຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ລົງຢ້ຽມຢາມ ແລະ ໃຫ້ກຳລັງໃຈປະຊາຊົນບ້ານຕະລຸຍ ທີ່ໄດ້ຮັບຜົນກະທົບຈາກອັກຄີໄພ.

ບ້ານຕະລຸຍ ເປັນບ້ານນ້ອຍແຫ່ງໜຶ່ງທີ່ຕັ້ງຢູ່ເຂດພູດອຍສູງຊັນ ຫ່າງໄກສອກຫຼີກ ຫ່າງຈາກເທດສະບານແຂວງປະມານ 170 ກິໂລແມັດ, ມີພົນລະເມືອງ 272 ຄົນ ຍິງ 131 ຄົນ, ມີ 36 ຫຼັງຄາເຮືອນ49ຄອບຄົວ. ເຫດການໄຟໄໝ້ເຮືອນ ແມ່ນເກີດຂຶ້ນໃນຄ່ຳຄືນຂອງວັນທີ 3 ເມສາ ໂດຍມີເຮືອນປະຊາຊົນຖືກໄຟໄໝ້ໄດ້ຮັບຄວາມເສຍຫາຍ 35 ຫຼັງຄາເຮືອນ; ຜົນກະທົບຈາກອັກຄີໄພໃນຄັ້ງນີ້ ແມ່ນໄດ້ມີຫຼາຍພາກສ່ວນ ໂດຍສະເພາະອົງການຈັດຕັ້ງພັກ-ລັດຂອງແຂວງ-ເມືອງ, ບັນດາສະມາຄົມ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ ໄດ້ມີຄວາມເປັນຫ່ວງເປັນໄຍ ແລະ ໃຫ້ການຊ່ວຍເຫຼືອ.

ໂອກາດນີ້, ທ່ານປະທານສະພາປະຊາຊົນແຂວງໄດ້ມອບວັດຖຸປັດໄຈເປັນເງິນສົດໃຫ້ເຮືອນລະ 1 ລ້ານກີບ ລວມມູນຄ່າທັງໝົດ 36 ລ້ານກີບ ເພື່ອບັນເທົາທຸກ ແລະ ເປັນຂວັນກຳລັງໃຈໃຫ້ປະຊາຊົນທີ່ຖືກເຄາະຮ້າຍໄຟໄໝ້ເຮືອນ ເຊິ່ງປັດໄຈເຫຼົ່ານີ້ແມ່ນໄດ້ມາຈາກການປະກອບສ່ວນຂອງບໍລິສັດ ວິລາການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ແລະ ສະມາຄົມຫວຽດນາມປະຈຳແຂວງເຊກອງ; ທ່ານ ດົງເພັດ ພະຍົນ ໄດ້ສະແດງຄວາມເສຍໃຈຕໍ່ເຫດການທີ່ເກີດຂຶ້ນໃນຄັ້ງນີ້ ແລະ ຮຽກຮ້ອງໃຫ້ປະຊາຊົນມີສະຕິ, ມີແນວຄິດອຸ່ນອຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ລັດ ກໍຄືຄະນະພັກ-ອົງການປົກຄອງແຂວງ, ເມືອງ ແລະ ບ້ານ ເຊິ່ງເວລາໃດກໍເປັນຫ່ວງເປັນໄຍຕໍ່ຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກເຄາະຮ້າຍໄຟໄໝ້ເຮືອນຄັ້ງນີ້ ຈຶ່ງໄດ້ປຸກລະດົມ, ຂົນຂວາຍບັນດາຂະແໜງການ, ບັນດາບໍລິສັດ-ລັດວິສາຫະກິດ ແລະ ບຸກຄົນ-ນິຕິບຸກຄົນນຳເອົາເຄື່ອງຊ່ວຍເຫຼືອ-ວັດຖຸປັດໄຈ ມາມອບໃຫ້ ເພື່ອເປັນການບັນເທົາທຸກ ແລະ ນຳໄປຟື້ນຟູໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ.

**(ນາງ ນາລີວັນ ແສງມະນີ)**

# ຮອງປະທານ ສພຂ ອັດຕະປື ເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝວິສາມັນ

(ສພຂ) - ວັນທີ 9 ເມສາຜ່ານມາ ທີ່ຫ້ອງວ່າການປົກຄອງເມືອງໄຊເສດຖາແຂວງອັດຕະປື, ທ່ານ ນາງ ພອນມະນີ ຊຽນໄຊຍະວົງ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17, ຮອງປະທານສະພາປະຊາຊົນແຂວງ (ສພຂ) ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີIX ໂດຍມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຄະນະນຳຂອງເມືອງ, ຕະຫຼວດ ແລະ ພະນັກງານ-ລັດຖະກອນອ້ອມຂ້າງເມືອງ ເຂົ້າຮ່ວມ 60 ທ່ານ.




ທ່ານ ນາງ ພອນມະນີ ຊຽນໄຊຍະວົງ ໃຫ້ຮູ້ວ່າ: ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍໄດ້ອອກເປັນມະຕິຂອງສະພາແຫ່ງຊາດ 5 ສະບັບ ຄື: 1) ມະຕິວ່າດ້ວຍການຮັບຮອງເອົາການປັບປຸງລັດຖະທຳມະນູນ ສະບັບປີ 2025, 2) ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງປີ 2025, 3) ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍພະນັກງານ-ລັດຖະກອນສະບັບປັບປຸງປີ2025, 4) ມະຕິວ່າດ້ວຍການຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ແລະ5) ມະຕິວ່າດ້ວຍການຮັບຮອງເອົານະໂຍບາຍສົ່ງເສີມພິເສດສະເພາະໃຫ້ຜູ້ລົງທຶນໃນນິຄົມອຸດສາຫະກຳອຳມະຕະ. ຜົນສຳເລັດຂອງກອງປະຊຸມສະໄໝວິສາມັນເທື່ອທີ 2 ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດ

ອ່ານຕໍ່ໜ້າ 8




## ຮັບສະມາຊິກ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນສວາຍວັນທີ26 ເມສານີ້ ທີ່ສະພາແຫ່ງຊາດ ໄດ້ມີພິທີປະກາດຮັບສະມາຊິກສະມາຄົມມິດຕະພາບ ລາວ-ກຳປູເຈຍຂັ້ນສູນກາງ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກຳປູເຈຍ ຂັ້ນສູນກາງ; ເຂົ້າຮ່ວມມີຄະນະບໍລິຫານງານ ແລະ ບັນດາສະມາຊິກສະມາຄົມມິດຕະພາບລາວ-ກຳປູເຈຍຂັ້ນສູນກາງ.

ໃນພິທີໄດ້ຜ່ານແຈ້ງການ ແລະ ຂໍ້ຕົກລົງຂອງປະທານສະມາຄົມມິດຕະພາບ ລາວ-ກຳປູເຈຍ ຂັ້ນສູນກາງ ສະບັບເລກທີ 06,07,08ແລະ09/ສມລ-ກ, ລົງວັນທີ 21 ເມສາ 2025 ວ່າດ້ວຍການແຕ່ງຕັ້ງສະມາຊິກສະມາຄົມມິດຕະພາບ ລາວ-ກຳປູເຈຍ ຂັ້ນສູນກາງ ຄື: ທ່ານ ດຣ. ທອງຫວ່າງ ລາດຊະວົງ ອະດີດຫົວໜ້າກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ, ທ່ານ ເພັດສະໝອນ ເທບພະວົງ ອະດີດຫົວໜ້າອຳນວຍການບໍລິສັດລາວໂທລະຄົມມະນາຄົມສາຂາແຂວງສະຫວັນນະເຂດ, ທ່ານ ພູວົງ ພະມີສິດ ປະທານສະມາຄົມເຄື່ອງປະດັບແລະອັນຍະມະນີລາວ, ທ່ານ ອາງ ບົດ (Ang Buth) ຜູ້ອຳນວຍໃຫຍ່ທະນາຄານ ແຄນນາເດຍລາວ ຈຳກັດ; ຈາກນັ້ນ, ກໍໄດ້ມອບຂໍ້ຕົກລົງໃຫ້ສະມາຊິກໃໝ່ 4 ທ່ານ.

ທ່ານ ຄຳໃບ ດຳລັດ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການສະໝັກໃຈເຂົ້າເປັນສະມາຊິກຂອງສະມາຄົມມິດຕະພາບ ລາວ-ກຳປູເຈຍ ຂັ້ນສູນກາງ ເພື່ອປະກອບສ່ວນສະຕິປັນຍາ, ເຫື່ອແຮງ ແລະ ເສດຖະກິດເຂົ້າໃນການເຄື່ອນໄຫວຂອງສະມາຄົມ ກໍຄືການປະກອບສ່ວນເສີມຂະຫຍາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືຮອບດ້ານ ໝັ້ນຄົງ ຍາວນານຂອງສອງພັກ, ສອງລັດແລະປະຊາຊົນສອງຊາດ ລາວ-ກຳປູເຈຍ. ພ້ອມນັ້ນ, ທ່ານຍັງຮຽກຮ້ອງໃຫ້ບັນດາຄະນະບໍລິຫານງານ ແລະສະມາຊິກທຸກທ່ານ ຈົ່ງພ້ອມກັນເອົາໃຈໃສ່ສົມທົບກັບຝ່າຍກຳປູເຈຍ ໃນການເຜີຍແຜ່ແລະໃຫ້ຂໍ້ມູນ, ຄວາມຮູ້ແກ່ປະຊາຊົນສອງປະເທດ ຕໍ່ມູນເຊື້ອອັນດີງາມແຫ່ງການພົວພັນແລະການຮ່ວມມືຂອງລາວແລະກຳປູເຈຍເພື່ອໃຫ້ເຂົາເຈົ້າເຂົ້າໃຈແຈ້ງ, ເລິກເຊິ່ງເພື່ອສືບຕໍ່ຖະໜຸຖະໜອມ ແລະ ເພີ່ມພູນຄູນສ້າງໃຫ້ສູ່ຮຸ່ນລູກ, ຮຸ່ນຫຼານຕໍ່ໄປ; ປະສານງານແລະສົມທົບກັບຝ່າຍກຳປູເຈຍ ໃນການຈັດກິດຈະກຳຕ່າງໆໃນໂອກາດສຳຄັນຂອງສອງປະເທດດ້ວຍຮູບການຈັດປາຖະກະຖາ, ວາງສະແດງຮູບພາບ, ຈັດກິລາມິດຕະພາບ, ຖາມ-ຕອບ, ຂຽນບົດກາບກອນ, ບົດເລື່ອງ, ບົດກາວີກ່ຽວກັບການຮ່ວມມືລາວ-ກຳປູເຈຍ; ສະໜັບສະໜູນ, ອຳນວຍຄວາມສະດວກ ແລະ ສົ່ງເສີມການພົບປະແລກປ່ຽນຢ້ຽມຢາມ ແລະ ຈັດກິດຈະກຳລະຫວ່າງປະຊາຊົນ ໂດຍສະເພາະເຂດຊາຍແດນ ໃຫ້ເຂົາເຈົ້າມີຄວາມຮັກແພງ, ໄວ້ເນື້ອເຊື່ອໃຈແລະຮ່ວມມືກັນເພື່ອພັດທະນາເຮັດໃຫ້ຊາຍແດນເປັນຊາຍແດນມິດຕະພາບ, ສັນຕິພາບ ແລະ ການພັດທະນາ; ສືບຕໍ່ລະດົມທຶນ, ຂົນຂວາຍທຶນຮອນທີ່ບໍ່ຂັດກັບກົດໝາຍ ເພື່ອຊ່ວຍເຊື່ອກັນແລະກັນໃນເວລາຝ່າຍໃດໜຶ່ງໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ແລະ ຊ່ວຍເຫຼືອສັງຄົມໃນເມື່ອມີຄວາມຈຳເປັນ ແລະຮຽກຮ້ອງຕ້ອງການ; ຂະຫຍາຍສະມາຊິກຂອງສະມາຄົມມິດຕະພາບ ລາວ-ກຳປູເຈຍ ຂັ້ນສູນກາງ ແລະ ຂັ້ນແຂວງ ໃຫ້ຫຼາຍຂຶ້ນ ເພື່ອເປັນກຳລັງແຮງຮອບດ້ານໃຫ້ແກ່ສະມາຄົມມິດຕະພາບ ລາວ-ກຳປູເຈຍ ຂັ້ນສູນກາງ.

**(ນາງ ອາລິນ ສຸພົມມະປະດິດ)**



## ຮອງປະທານ...

(ຕໍ່ຈາກໜ້າ 7)

ຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີIXເຂົ້າສູ່ວຽກງານຕົວຈິງ; ເປັນໝາກຜົນລວມສູນສະຕິປັນຍາ, ການສະແດງອອກສິດປະຊາທິປະໄຕ ກໍຄືຜົນຂອງການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາສະມາຊິກສະພາແຫ່ງຊາດ, ການຕັດສິນໃຈສູງຂອງລັດຖະບານ, ອົງການທີ່ກ່ຽວຂ້ອງ ທີ່ມີຄວາມພະຍາຍາມ ແລະ ມີມາດຕະການຕົວຈິງໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ຕົກໄປເທື່ອລະກ້າວ, ມີການປັບປຸງບັນດາເອກະສານນິຕິກຳທີ່ສຳຄັນ ນັບທັງຄວາມຕັດສິນໃຈໃນການປັບປຸງກົງຈັກການຈັດຕັ້ງເພື່ອສ້າງໃຫ້ມີການຫັນປ່ຽນໃໝ່ຢ່າງເລິກເຊິ່ງ ເພື່ອສ້າງຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການນຳພາຂອງພັກ ແລະ ລັດ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃຫ້ມີຄວາມໜັກແໜ້ນຂຶ້ນເລື້ອຍໆ.

**(ວິນັດ ສີສຸລາດ)**




# ຮັກຊາດ ຕ້ອງຮັກສຸຂະພາບ

**# ດົ້ນກົບເມກ**

ຜູ້ຂຽນໄດ້ອ່ານປຶ້ມເລື່ອງ: ເອົາລຸງເປັນແບບຢ່າງ ເຊິ່ງກ່ຽວຂ້ອງພົວພັນເຖິງແນວຄິດການດຳເນີນຊີວິດ-ຮູບແບບການເຮັດວຽກຂອງທ່ານ ໄກສອນ ພົມວິຫານ ທີ່ຂຽນເລົ່າຈາກບັນດາສະມາຊິກພັກ-ພະນັກງານ ເຄີຍຮັບໃຊ້ວຽກແລະຜູ້ໄດ້ຜ່ານການພົວພັນໜ້າວຽກ ຫຼື ໄດ້ຮັບການຊີ້ນຳຈາກທ່ານ ໄກສອນ ພົມວິຫານ, ຜູ້ຂຽນຕິດໃຈຫຼາຍຫົວຂໍ້ ເຊິ່ງໜຶ່ງໃນນັ້ນແມ່ນຄຳເວົ້າຂອງເພິ່ນທີ່ເວົ້າວ່າ: ຮັກຊາດຕ້ອງຮັກສຸຂະພາບ. ເລື່ອງມີຢູ່ວ່າ: ມື້ໜຶ່ງປະມານຄ້າຍແລງຫຼັງເລີກການ, ທ່ານ ໄກສອນ ພົມວິຫານ ໄດ້ອວ່າຍໜ້າເບິ່ງແສງແດດ ເວົ້າຂຶ້ນວ່າ: ຮອດໂມງເຮົາຫຼິ້ນກິລາແລ້ວ, ການຮັກສາສຸຂະພາບບໍ່ໃຫ້ຖືເບົາ-ຄົນເຮົາເກັ່ງປານໃດກະເກັ່ງເດີ ຄັນສຸຂະພາບບໍ່ດີຊິເຮັດອີ່ຫຍັງໄດ້ແດ່? ເວລາເພິ່ນກຳລັງອອກກຳລັງກາຍຢູ່ນັ້ນ ກໍໄດ້ເວົ້າສອນພະນັກງານໄປນຳວ່າ: ຮັກສາສຸຂະພາບກໍແມ່ນຮັກຊາດ; ເມື່ອແຂງແຮງ ເຮົາກໍປະກອບສ່ວນວຽກໄດ້ດີ ບໍ່ເປັນພາລະຂອງຄອບຄົວ ແລະ ສັງຄົມ, ຢູ່ດີກິນດີ ຮັ່ງມີຂຶ້ນ.

ປັດຈຸບັນ, ຜູ້ຂຽນ ໄດ້ຕິດຕາມຂ່າວຕ່າງປະເທດອ້ອມຂ້າງທີ່ມີເຈົ້າໜ້າທີ່ລັດປາບປາມຫຼິ້ນເກມ-ພະນັນອອນລາຍ ແລະ ຂາຍນ້ຳກະທ້ອມ, ຢາສູບໄຟຟ້າ ທີ່ຊາວໜຸ່ມເຍົາວະຊົນພາກັນຕິດງອມແງມ, ເປັນຫຍັງຈຶ່ງຄິດເຫັນປະເດັນນີ້ເຊື່ອມໂຍງກັນກໍຍ້ອນວ່າຄຳເວົ້າເພິ່ນວ່າ: ຮັກຊາດ ຄືການຮັກສຸຂະພາບ, ຖ້າວ່າພວກຊາວໜຸ່ມເຍົາວະຊົນຕິດຢາສູບໄຟຟ້າ-ຕິດນ້ຳກະທ້ອມທີ່ຕົ້ມໃສ່ສານເຄມີຕ່າງໆ... ຫຼ້າສຸດຜູ້ຂຽນໄດ້ຍິນທາງສຽງ-ສັງເກດເຫັນວ່າ ນ້ຳກະທ້ອມບໍ່ພຽງແຕ່ກິນ-ຂາຍໃນໂຮງຮຽນ, ເຍົາວະຊົນທໍ່ນັ້ນ ແຕ່ມັນຍັງຄືບຄານເຂົ້າໄປຕົ້ມກິນພາຍໃນກຸດຕິຈົວເນນນຳອີກ...!

ຜູ້ຂຽນເວົ້າມາຂ້າງເທິງນັ້ນ ເພື່ອແລກປ່ຽນ-ໃຫ້ກວດກາເຂັ້ມງວດລອງເບິ່ງ-ເຈົ້າ ອາວາດກໍຕ້ອງຕິດຕາມເບິ່ງລູກວັດ ຄືກັບນາຍບ້ານຕ້ອງເບິ່ງລູກບ້ານ, ຢ່າລືມ ສຸຂະພາບແຂງແຮງສຳຄັນແທ້ເນີ!




# ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

1.ເຮັດໃຫ້ພະນັກງານກ້າຫານເວົ້າ, ກ້າຫານສະເໜີຄຳເຫັນ, ຖ້າຜູ້ທີ່ເປັນຜູ້ນຳຢາກຮູ້ຄັກຂໍ້ບົກພ່ອງຂອງຕົນ, ຢາກຮູ້ວ່າ ວຽກການຂອງຕົນດີ ຫຼື ຊົ່ວກໍ່ບໍ່ມີວິທີໃດນອກຈາກເຮັດໃຫ້ພະນັກງານເຮົາກ້າຫານອອກຄຳເຫັນ ແລະ ຕຳໜິເຮົາ. ເຮັດແນວນັ້ນບໍ່ ພຽງແຕ່ແຕະຕ້ອງຫຍັງເຖິງອິທິພົນຂອງຜູ້ນຳ, ແຕ່ມັນຍັງສະແດງເຖິງການເປັນປະຊາທິປະໄຕແລະຄວາມຈິງໃຈຕໍ່ກັນຢູ່ໃນພັກອີກດ້ວຍ. ຖ້າວ່າພະນັກງານບໍ່ເວົ້າບໍ່ວ່າຫຍັງ, ບໍ່ອອກຄຳຄິດຄຳເຫັນ, ບໍ່ຕຳໜິ, ໜຳຊາຍົກຍໍເຮົາ ແລະ ມາປະຈົບປະແຈງເຮົານັ້ນມັນເປັນ ປະກົດການອັນຊົ່ວທີ່ສຸດ. ເພາະມັນບໍ່ແມ່ນວ່າເຂົາເຈົ້າບໍ່ມີຫຍັງເວົ້າ ມັນແມ່ນເຂົາເຈົ້າບໍ່ກ້າເວົ້າເຂົາເຈົ້າຢ້ານ ນັ້ນແມ່ນເສື່ອມເສຍປະຊາ ທິປະໄຕພາຍໃນພັກໄປໝົດ. ນັ້ນແມ່ນພາຍໃນມືດມົນ, ພະນັກງານກາຍປັນເຄື່ອງຈັກ, ແຕ່ໃນໃຈອຸກອັ່ງ, ບໍ່ກ້າເວົ້າອອກ, ກາຍອຸກ ອັ່ງກໍ່ກາຍເປັນຄຽດຊັງ ແລະ ເບື່ອໜ່າຍ, ເປັນແນວນັ້ນຈະໄປໃຫ້ ພະນັກງານເຮັດວຽກການໃຫ້ດີໄດ້ແນວໃດ?.

2. ເຮັດໃຫ້ພະນັກງານມີຄວາມກ້າຫານຮັບຜິດຊອບ ແລະ ກ້າຫານເຮັດວຽກ. ການຈະຈົບດີ ຫຼື ຊົ່ວຮ້າຍນັ້ນສ່ວນໜຶ່ງແມ່ນ ເປັນຍ້ອນພະນັກງານມີຄວາມສາມາດ ຫຼືບໍ່ນັ້ນກໍ່ຈິງຢູ່; ແຕ່ອີກສ່ວນໜຶ່ງມັນກໍ່ເປັນການນຳຖືກ ຫຼື ບໍ່ດັ່ງນັ້ນອີກດ້ວຍ. ຄວາມສາມາດຂອງຄົນນັ້ນມັນບໍ່ແມ່ນເກີດມີມາເອງ, ສ່ວນຫຼາຍມັນແມ່ນອາ ໄສການທີ່ເຮັດ ແລະອາໄສການຝຶກຝົນອົບຮົມຈຶ່ງເກີດມີຂຶ້ນມາໄດ້. ຖ້າການນຳບໍ່ດີ, ຄວາມສາມາດໃຫຍ່ກໍຈະກາຍເປັນຄວາມສາມາດນ້ອຍ.

ເວລາມອບວຽກໃຫ້ພະນັກງານເຮັດຕ້ອງນຳພາຢ່າງຄັກແນ່ ຈັດວາງໃຫ້ຄົບຖ້ວນ, ຕ້ອງຊີ້ແຈງໃຫ້ເຫັນຈຸດສຳຄັນ ແລະ ໃຫ້ເຫັນ ຂໍ້ຫຍຸ້ງຍາກທີ່ອາດຈະເກີດຂຶ້ນ ແລະ ພາຊອກວິທີຜ່ານຜ່າຈົນເຫັນ ແຈ້ງ. ເມື່ອວຽກນັ້ນຫາກຕົກລົງແລ້ວກໍ່ປ່ອຍໃຫ້ເຂົາເຈົ້າເຮັດ, ແນະນຳໃຫ້ເຂົາເຈົ້າກ້າຫານເຮັດເຊັ່ນດຽວກັນກັບກອງທະຫານ, ເມື່ອເລື່ອງຍຸດທະສາດ, ຍຸດທະວິທີ ແລະ ໜ້າທີ່ຫາກຕົກລົງກັນແລ້ວ, ຜູ້ບັນຊາສູງສຸດ ກໍ່ບໍ່ຕ້ອງຍື່ນມືເຂົ້າກ່ຽວຂ້ອງກັບເລື່ອງມຸ່ນຍ່ອຍ, ຕ້ອງປ່ອຍໃຫ້ກອງບັນຊາການຊັ້ນຕ່າງໆ ມີສິດຈັດໄປຕາມສະພາບການ, ດັ່ງນັ້ນຈຶ່ງສາມາດຂະຫຍາຍຄວາມສາມາດຂອງພະນັກງານໄດ້. ຖ້າວ່າວຽກຫຍັງຊັ້ນສູງກໍ່ຍື່ນມືເຂົ້າກ່ຽວຂ້ອງນຳ, ພະນັກງານ ກໍ່ເລີຍເປັນເຄື່ອງຈັກບໍ່ຮູ້ຄິດ, ບໍ່ຊ່າງໃຊ້ສະໝອງ ແລະ ຄວາມສາມາດຂອງຕົນເອງ, ບໍ່ເຊື່ອຕົນເອງ, ຈະເຮັດຫຍັງກໍມີແຕ່ຖ້າຄຳສັ່ງ ຊັ້ນສູງ, ຊັ້ນສູງບໍ່ສັ່ງກໍ່ບໍ່ເຮັດ, ມີແຕ່ເອື້ອຍອີງໃສ່ຜູ້ອື່ນ, ຕົວເອງບໍ່ ມີຫົວຄິດປະດິດສ້າງ, ນຳໃຈຮັບຜິດຊອບກໍ່ເລີຍບໍ່ມີ.

ອ່ານຕໍ່ສະບັບໜ້າ...



## ສຸຂະພາບທາຍໂຣຄ

# ສັບພະຄຸນໝາກຫວ້າ

# ຮຽບຮຽງໂດຍ: ທິວກະທີ



ໝາກຫວ້າ ແມ່ນໝາກໄມ້ທີ່ຄົນລາວເຮົາຮູ້ຈັກ ແລະ ຄຸ້ນເຄີຍ ເພາະມີຢູ່ຕາມທົ່ວໄຮ່ປາຍນາ ແຕ່ທ່ານຮູ້ບໍ່ວ່າ, ໝາກໄມ້ຊະນິດນີ້ມີຄຸນຄ່າທາງໂພຊະນາການຫຼາຍ ເພາະເຕັມໄປດ້ວຍວິຕາມິນ ແລະ ແຮ່ທາດຕ່າງໆ ເຊັ່ນ: ວິຕາມິນຊີ, ຟົດສະຟໍ, ແຄວຊຽມ ແລະ ຄາໂບຮາຍເດດ ເຊິ່ງມີປະໂຫຍດຫຼາຍຕໍ່ສຸຂະພາບ ໂດຍນິຍົມກິນໝາກສຸກ(ໝາກສຸກຈະມີສີມ່ວງ ແລະ ສີດຳ ມີລົດຊາດສົ້ມຫວານ ແລະ ຝາດ) ແລະຖືກນຳໄປປຸງແຕ່ງເປັນເຄື່ອງດື່ມເພື່ອສຸຂະພາບ. ນອກນັ້ນ, ໝາກຫວ້າຍັງມີສັບພະຄຸນໃຊ້ເປັນຢາຮັກສາພະຍາດ ແລະ ອາການຕ່າງໆໄດ້ ເຊັ່ນ: ເອົາໃບ ແລະເປືອກຂອງຕົ້ນຫວ້າມາສະກັດເປັນນ້ຳມັນຫອມລະເຫີຍ ເຊິ່ງມີຄຸນສົມບັດທີ່ຫຼາກຫຼາຍ ເຊັ່ນ:ຊ່ວຍໃນການຍ່ອຍອາຫານ, ຊ່ວຍຫຼຸດຜ່ອນການຈັບໂຕເປັນກ້ອນຂອງເລືອດ, ມີສັບພະຄຸນຕ້ານເຊື້ອແບັກທີເຣຍ, ຕ້ານມະເຮັງ ແລະ ອື່ນໆ.

ຄຸນປະໂຫຍດຂອງໝາກຫວ້າ ມີດັ່ງນີ້:

- ໝາກ ຊ່ວຍບັນເທົາອາການຂອງວັນນະໂລກ ແລະ ໂລກປອດໄດ້ ໂດຍນຳເອົາໝາກຫວ້າໄປຕາກໃຫ້ແຫ້ງ ແລ້ວບົດໃຫ້ລະອຽດຮັບປະທານເປັນປະຈຳ ຈະຊ່ວຍບັນເທົາອາການອາການໃຫ້ດີຂຶ້ນ;
- ໝາກສົດຊ່ວຍຮັກສາໂລກຫອບຫືດທີ່ເກີດຈາກພູມແພ້ ໂດຍການນຳໝາກສົດມາຕົ້ມແລ້ວເອົານ້ຳມາດື່ມ ເພື່ອບັນເທົາອາການແລະຊ່ວຍຫຼຸດຄວາມສ່ຽງການເປັນໂລກຫົວໃຈແລະຫຼອດເລືອດໃນສະໝອງຕີບໄດ້;
- ໝາກດິບ ອຸດົມໄປດ້ວຍທາດເຫຼັກ ທີ່ຊ່ວຍບຳລຸງກະດູກ ແລະ ແຂ້ວ, ຊ່ວຍໃນການຮັກສາອາການຖອກທ້ອງ ແລະ ຊ່ວຍຍັບຍັ້ງເຊື້ອແບັກທີເລຍທີ່ເຮັດໃຫ້ຖອກທ້ອງຫຼືຖ່າຍແຫຼວ;
- ໝາກສຸກ ໃຊ້ເປັນຢາແກ້ອາການຖອກທ້ອງ ແລະ ທ້ອງບິດ.
- ເປືອກ ແລະ ໃບ ນຳມາເຮັດເປັນຢາອົມ ແກ້ອາການຮ້ອນໃນບໍລິເວນຜົ້ງປາກ ແລະ ຊ່ວຍບັນເທົາອາການນ້ຳລາຍໝຽວ;
- ໃບ ແລະ ແກ່ນ ໃຊ້ໃນການຮັກສາອາການທ້ອງບິດ, ຖ່າຍເປັນມູກເລືອດ ແລະ ຖອກທ້ອງ;ຊ່ວຍຮັກສາໂລກເບົາຫວານ ໂດຍການໃຊ້ໃບຫວ້າແລະແກ່ນຕົ້ມ ຫຼື ບົດ ໃຫ້ລະອຽດ ແລ້ວນຳມາຮັບປະທານ ເພື່ອຊ່ວຍຮັກສາອາການເບົາຫວານ ເພາະມີສານຊະນິດໜຶ່ງທີ່ຊ່ວຍຫລຸດລະດັບນ້ຳຕານໃນເລືອດ ຫຼື ນຳມາທາຜິວໜັງ ກໍສາມາດຮັກສາໂລກຜິວໜັງໄດ້.
- ນ້ຳມັນຫອມລະເຫີຍ ຊ່ວຍຫຼຸດຜ່ອນຄວາມສ່ຽງ ແລະ ຕໍ່ຕ້ານການເກີດມະເຮັງ, ຊ່ວຍໃນການຍ່ອຍອາຫານໂດຍການເພີ່ມການປ່ອຍນ້ຳບີ ແລະ ນ້ຳຍ່ອຍຕ່າງໆ, ປ້ອງກັນໂລກກະເພາະ,ຫຼຸດຜ່ອນການຈັບໂຕເປັນກ້ອນຂອງເລືອດ,ຕ້ານເຊື້ອແບັກທີເລຍ.

## ອາດ ກະວີລາວ

# ຄ່າຂອງກຳມະກອນ

# ແກ້ວຕາວັນ

✳ ຕຶກຫຼັງສູງສຽດຟ້າ
ສີຂາວແດງແກມເຫຼືອງ
ແມ່ນສີມືຂອງອ້າຍ
ເປັນຄົນມາກໍ່ສ້າງ

ຫຼາຍຍ່ານມຸມເມືອງ
ສະຫງ່າງາມຍາມຈ້ອງ
ຊາຍເປັນຄົນແຕ່ງ
ແປງໃຫ້ຈື່ງງາມ

✳ ບໍ່ແມ່ນຄົນຢູ່ຫ້ອງ
ບໍ່ແມ່ນຄົນຂາຍຂອງ
ບໍ່ແມ່ນລັດຖະກອນຄົນຜູ້
ແຕ່ແມ່ນກຳມະກອນຢ່າງອ້າຍ

ແອນັ່ງເຢັນສະບາຍ
ຢູ່ຕາມໂຮງຮ້ານ
ເງິນເດືອນສູງສິ່ງ
ຊາຍນີ້ທີ່ທຳ

✳ ເຮືອນຫຼັງງາມທີ່ນ້ອງ
ມີເຫື່ອໄຄຂອງຊາຍ
ສີຈິ່ງເງົາງາມເຫຼື້ອມ
ຄັນຂາດຄົນຢ່າງອ້າຍ

ນາງຢູ່ອາໄສ
ຢາດປີນເປດ້ອຍ
ທາງໃນດູອາດ
ໃຜແທ້ທີ່ຈະທຳ

✳ ນ້ອງເອີຍ ນາງຢ່າໄດ້
ເກີງຫົວຕີນປາຍນອນ
ແຕ່ວ່າເຮືອນຂອງເຈົ້າ
ບໍ່ແມ່ນແຝນໝ່ອມນ້ອງ

ລັງກຽດກຳມະກອນ
ບໍ່ມີຄືນ້ອງ
ຊາຍເປັນຄົນກໍ່
ແປງໃຫ້ບາດທະແພງ

✳ ຢ່າສຳແດງວ່າເວົ້າ
ຫາກວ່າເຮືອນນາງເພ
ມີຫຼື ຄົນລວຍຈະມາສ້າງ
ຄັນບໍ່ແມ່ນກຳມະກອນຢ່າງອ້າຍ

ເອົາປຽບກຳມະກອນ ຫຼາຍເນີ!
ຜຸ່ຍພັງທະລາຍມ້າງ
ເຮືອນນາງຄືນໃໝ່
ມາສ້າງເພື່ອນາງ



## ລົມສາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

✳ ຮົມເຊີຍວັນ**ກຳມະກອນສາກົນ** ທີ່ໄດ້ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງຮອບ **139ປີ**ທີ່ກຳມະກອນໄດ້ມີປະຊາທິປະໄຕເຕັມສ່ວນ ມອບປະຊາທິວດ້າວ ຈະເລີນກ້າວລື່ນຫຼັງ ຊົມດັ່ງຄຳກ່າວຍ້ອງ ເຊັງຊ່າລືຊາ ວ່າເປັນກະດູກສັນຫຼັງ ກໍ່ແປງເມືອງບ້ານ ໃຫ້ປະເທດຊາດນັ້ນ ຈະເລີນເຮືອງຮຸ່ງ ພັດທະນາດຸ່ງກ້າວ ໃຫ້ລາວເທົ້າທຽບໂລກາ **ນັ້ນແລ້ວ!**

✳ **ຊ່າວ**ດີຈະມີການອອກ**ບັດປະຈຳຕົວແບບດີຈິຕອນ** ເພື່ອບໍລິໃຊ້ໃຫ້ແກ່ປະຊາຊົນລາວທົ່ວປະເທດ ເປັນເຫດການກ່າວແຈ້ງ ລາວຮຸ່ງເຮືອງສີ ມີການພັດທະນາໄຕ່ຕາມແດນດ້າວ ເອົາດີຈິຕອນທັນເສົ້າ ວຽກງານຫຼາຍສ່ວນ ເພື່ອປວງປະຊາພີ່ນ້ອງ ບໍລິໃຊ້ທົ່ວເຖິງກັນ **ນັ້ນແລ້ວ!**

## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ຈັກສອງສາມມື້

ຜູ້ເປັນພໍ່ກັບເຮືອນເດິກດື່ນດ້ວຍອາການມຶນເມົາໃນມື້ວັນເກີດຂອງຜູ້ເປັນເມຍ, ຜູ້ເປັນເມຍຈຶ່ງຢືນຖ້າພ້ອມກັບຖາມຜູ້ເປັນພໍ່ດ້ວຍນ້ຳສຽງລຽບໆເຢັນໆວ່າ:

**ເມຍ:** ເຈົ້າບໍ່ຢາກເຫັນຂ້ອຍຈັກສອງສາມມື້ບໍ່ພໍ?

ຜູ້ເປັນພໍ່ນຶກໃນໃຈ ມື້ນີ້ຄືມາໄດ້ຍິນຂໍ້ສະເໜີດີໆແບບນີ້ບໍ່ ຈຶ່ງຮີບຕອບກັບໄປວ່າ:

**ພໍ່:** ວ້າວໆໆໆ! ກະດີເລີຍຕີເມຍເອີຍ

ປາກົດວ່າວັນຈັນຜ່ານໄປກໍບໍ່ເຫັນໜ້າເມຍ... ວັນອັງຄານຜ່ານໄປກະຍັງບໍ່ເຫັນ ວັນພຸດກະຍັງບໍ່ເຫັນ ວັນພະຫັດ ເຂົາກໍເລີ່ມເຫັນເມຍຢູ່ທາງຕາເບື້ອງຊ້າຍ ເມື່ອອາການຕາບວມເລີ່ມດີລົງ...



## ຄະຕິເຕືອນໃຈ

# ດອກຫຍ້າ

ກົດຂອງແອ່ນ ຄືສະທ້ອນພານກັບມາ
ກົດຂອງເວລາ ຄືບໍ່ສາມາດຍ້ອນກັບໄດ້
ກົດຂອງຊີວິດ ຄືທຸກຢ່າງບໍ່ຈີລັງ
ແລະ ກົດທີ່ບໍ່ເຮັດໃຫ້ຜິດຫວັງ ຄືກົດແຫ່ງກຳ

ລັດຖະສະພາຕ່າງປະເທດ

# ປິດກອງປະຊຸມຄະນະປະຈຳ NPC ສະໄໝທີ 15



(Xinhua) - ເມື່ອວັນພຸດທີ 30 ເມສາຜ່ານມາ, ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (National People's Congress - NPC) ຊຸດທີ XIV ໄດ້ປິດກອງປະຊຸມສະໄໝທີ 15 ໂດຍການເປັນປະທານຂອງທ່ານ ຈ້າວ ເລີ້ຈີ້ ປະທານຄະນະປະຈຳNPC; ບັນດາສະມາຊິກສະພາ ໄດ້ລົງຄະແນນສຽງຮັບຮອງເອົາກົດໝາຍການສົ່ງເສີມພາກເອກະຊົນ ແລະຮ່າງກົດໝາຍວ່າດ້ວຍການປ້ອງກັນ ແລະ ປິ່ນປົວພະຍາດຕິດແປດສະບັບປັບປຸງ, ຮັບຮອງເອົາມະຕິຍົກຍ້າຍທ່ານ ຈິນ ຈວງຫຼົງ (JinZhuanglong)ອອກຈາກຕຳແໜ່ງລັດຖະມົນຕີກະຊວງອຸດສາຫະກຳ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ແລະແຕ່ງຕັ້ງທ່ານ ຫຼີ່ ເລີ້ເສີງ (Li Lecheng) ໃຫ້ດຳລົງຕຳແໜ່ງດັ່ງກ່າວແທນ.

ທ່ານ ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງຂອງປະທານປະເທດ 3 ສະບັບ ເພື່ອປະກາດໃຊ້ກົດໝາຍ ແລະ ການຕົກລົງບັນຫາສຳຄັນຂ້າງເທິງ.

ກອງປະຊຸມໄດ້ຮັບຮອງເອົາມະຕິຂອງຄະນະປະຈຳສະພາແຫ່ງຊາດ ທີ່ອະນຸມັດໃຫ້ສະພາແຫ່ງລັດ (ຄະນະລັດຖະມົນຕີ) ດັດແກ້ການບັງຄັບໃຊ້ບົດບັນຍັດທີ່ກ່ຽວຂ້ອງໃນກົດໝາຍວ່າດ້ວຍເມັດພັນພືດ ພາຍໃນເຂດການຄ້າເສລີທົດລອງຂອງຈີນ (ຊິນຈຽງ Xinjiang) ເປັນການຊົ່ວຄາວ, ໃຫ້ສັດຕະຍາບັນຂໍ້ຕົກລົງລະຫວ່າງຈີນ ກັບ ຊາອຸດິ ອາຣັບບີ ກ່ຽວກັບການຊ່ວຍເຫຼືອດ້ານຕຸລາການ ແລະ ການຮ່ວມມືໃນປະເດັນແພ່ງ ແລະການຄ້າ, ແລະ ສົນທິສັນຍາລະຫວ່າງຈີນ ກັບ ເອທີໂອປີ ກ່ຽວກັບການໂອນຍ້າຍຜູ້ຖືກຕັດສິນລົງໂທດ; ນອກຈາກນີ້, ຍັງໄດ້ຮັບຮອງເອົາບົດລາຍງານຄຸນສົມບັດຂອງຜູ້ແທນແລະຮ່າງກົດໝາຍທີ່ກ່ຽວຂ້ອງກັບບຸກຄະລາກອນ.

ໃນການກ່າວຄຳເຫັນປິດກອງປະຊຸມ, ທ່ານຈ້າວ ໄດ້ຮຽກຮ້ອງໃຫ້ບັນດາສະມາຊິກສະພາປະຕິບັດຕາມບັນດາຫຼັກການຊີ້ນຳຂອງກອງປະຊຸມສະໄໝສາມັນເທື່ອທີ3ຂອງສະພາຜູ້ແທນປະຊາຊົນທົ່ວປະເທດ ຊຸດທີXIV ລວມເຖິງໜ້າທີ່ສຳຄັນສຳລັບປີ 2025 ທີ່ຄະນະປະຈຳNPC ກຳນົດໄວ້ ເຊິ່ງລວມມີວຽກງານນິຕິບັນຍັດ, ການຕິດຕາມກວດກາ, ຕົວແທນ ແລະ ວຽກງານການຕ່າງປະເທດ; ທ່ານຍັງຮຽກຮ້ອງໃຫ້ສະມາຊິກສະພາ ປະຕິບັດໜ້າທີ່ຂອງຕົນ ແລະ ປົກປັກຮັກສາການປະຕິຮູບ ແລະ ການພັດທະນາ ດ້ວຍກົດໝາຍທີ່ມີຄຸນນະພາບສູງ, ສືບຕໍ່ຍົກສູງຄຸນນະພາບ ແລະ ປະສິດທິຜົນວຽກງານຂອງສະພາຜູ້ແທນປະຊາຊົນ.

# ນູແວນເຊລັງ ກຽມຮ່າງກົດໝາຍ ຫ້າມເດັກອາຍຸຕ່ຳກວ່າ 16 ປີໃຊ້ສື່ສັງຄົມ




(AFP) - ລັດຖະບານນູແວນເຊລັງ ສະເໜີທີ່ຈະຫ້າມເດັກອາຍຸຕ່ຳກວ່າ16ປີເຂົ້າເຖິງສື່ສັງຄົມໂດຍເນັ້ນໜັກເຖິງຄວາມຈຳເປັນເພື່ອປົກປ້ອງເຍົາວະຊົນຈາກໄພອັນຕະລາຍຂອງເວທີເຕັກໂນໂລຊີຂະໜາດໃຫຍ່.

ວັນອັງຄານທີ 6 ພຶດສະພາຜ່ານມາ, ຄຣິສໂຕເຟີລັກຊອນ (Christopher Luxon) ນາຍົກລັດຖະມົນຕີນູແວນເຊລັງ ຖະແຫຼງກ່ຽວກັບຮ່າງກົດໝາຍທີ່ຈະບັງຄັບໃຫ້ບໍລິສັດສື່ສັງຄົມຕ້ອງມີມາດຕະການກວດສອບຂໍ້ມູນພື້ນຖານຂອງຜູ້ໃຊ້ວ່າ ພວກເຂົາມີອາຍຸຢ່າງໜ້ອຍ 16 ປີ ຫຼືບໍ່? ຖ້າບໍ່ດັ່ງນັ້ນ, ຈະຖືກປັບໃໝສູງເຖິງ 2 ລ້ານໂດລານູແວນເຊລັງ (ປະມານ 1.18 ລ້ານໂດລາສະຫະລັດ).

ລັກຊອນ ກ່າວວ່າ ກົດໝາຍສະບັບນີ້ແມ່ນເພື່ອຮັບປະກັນວ່າບັນດາບໍລິສັດສື່ສັງຄົມ ມີບົດບາດໃນການດູແລເດັກແລະເຍົາວະຊົນເມື່ອຢູ່ໃນໂລກອອນລາຍ; ເຖິງຢ່າງໃດກໍຕາມ, ຍັງບໍ່ມີກຳນົດຈະແຈ້ງເທື່ອວ່າ ຈະມີການຮ່າງກົດໝາຍໃຫ້ລັດຖະສະພາພິຈາລະນາເມື່ອໃດ, ແຕ່ຜູ້ນຳນູແວນເຊລັງສະແດງຄວາມຫວັງວ່າ ເລື່ອງນີ້ຈະໄດ້ຮັບການສະໜັບສະໜູນຈາກອົງການນິຕິບັນຍັດ.

ການຜ່ານຮ່າງກົດໝາຍດັ່ງກ່າວ ຈະຕ້ອງໄດ້ຮັບການສະໜັບສະໜູນຈາກພັນທະມິດໃນພັກຮ່ວມລັດຖະບານອີກ 2 ພັກ ເຊິ່ງຍັງບໍ່ມີພັກໃດອອກມາໃຫ້ຄວາມເຫັນຢ່າງເປັນທາງການ.

ອົດສະຕຣາລີ, ປະເທດບ້ານໃກ້ເຮືອນຄຽງຂອງນູແວນເຊລັງ, ເປັນຊາດທຳອິດໃນໂລກທີ່ອອກກົດໝາຍຫ້າມຜູ້ທີ່ມີອາຍຸຕ່ຳກວ່າ 16 ປີ ໃຊ້ເຄືອຂ່າຍສັງຄົມອອນລາຍທຸກປະເພດ.

# Putin ລົງນາມຮ່າງກົດໝາຍເພື່ອປົກປ້ອງຊາວລັດເຊຍຈາກອິດທິພົນຕ່າງຊາດ



(TASS) - ວັນທີ 21 ເມສາຜ່ານມາ, ປະທານາທິບໍດີລັດເຊຍ ວະລາດີມີຣ໌ ປູຕິນ ໄດ້ລົງນາມໃນຮ່າງກົດໝາຍຊຸດໜຶ່ງທີ່ຈະນຳໃຊ້ຂໍ້ຈຳກັດໃໝ່ສຳລັບບັນດາຕົວແທນຕ່າງປະເທດ ແລະ ການລົງໂທດທີ່ຮຸນແຮງຂຶ້ນຕໍ່ອາຊະຍາກຳທີ່ຂົ່ມຂູ່ຄວາມໝັ້ນຄົງ ແລະ ອະທິປະໄຕຂອງປະເທດ.

ນັບແຕ່ນີ້ເປັນຕົ້ນໄປ, ຕົວແທນຕ່າງປະເທດ ຈະບໍ່ສາມາດເຮັດວຽກດ້ານການສຶກສາແລະດຳລົງຕຳແໜ່ງຜູ້ບໍລິຫານໃນບໍລິສັດທີ່ຄວບຄຸມໂດຍລັດຖະບານ; ການລົງໂທດທີ່ເຂັ້ມງວດຍິ່ງຂຶ້ນຈະຖືກນຳໃຊ້ສຳລັບການຮຽກຮ້ອງໃຫ້ຂວ້ຳບາດລັດເຊຍ ຫາກອາຊະຍາກຳນັ້ນ ໄດ້ກະທຳເພື່ອຜົນປະໂຫຍດສ່ວນຕົວ.

ຂ້າງລຸ່ມນີ້ແມ່ນບາງຈຸດສຳຄັນຂອງກົດໝາຍໃໝ່ທີ່ຮວບຮວມໂດຍສຳນັກຂ່າວສານລັດເຊຍ ຫຼື TASS:

**ພື້ນຖານໃໝ່ສຳລັບການກຳນົດຕົວແທນຕ່າງປະເທດ**

- ຜົນລະເມືອງທີ່ຊ່ວຍເຫຼືອໃນການດຳເນີນການຕາມການຕັດສິນຂອງອົງການຈັດຕັ້ງສາກົນທີ່ລັດເຊຍບໍ່ໄດ້ເປັນສະມາຊິກ, ຫາກການຕັດສິນໃຈເຫຼົ່ານັ້ນແມ່ນແນໃສ່ກະທົບຕໍ່ຄວາມໝັ້ນຄົງຂອງສະຫະພັນລັດເຊຍ, ຈະຖືກກຳນົດໃຫ້ເປັນຕົວແທນຕ່າງປະເທດ ນັບແຕ່ນີ້ເປັນຕົ້ນໄປ.

-ສະຖານະພາບຕົວແທນຕ່າງປະເທດ ຍັງຈະຖືກມອບໃຫ້ລັດຖະບານຕ່າງປະເທດ ທີ່ສະໜັບສະໜູນການຕັດສິນທີ່ຄ້າຍຄືກັນ.

- ອີກເຫດຜົນໜຶ່ງທີ່ກຳນົດບຸກຄົນໃຫ້ເປັນຕົວແທນຕ່າງປະເທດ ແມ່ນການມີສ່ວນຮ່ວມຂອງພວກເຂົາ ລວມທັງຜູ້ເຍົາໃນການເກັບກຳຂໍ້ມູນກ່ຽວກັບກິດຈະກຳທາງດ້ານເຕັກນິກການທະຫານຂອງສະຫະພັນລັດເຊຍ, ຫາກການໄດ້ຮັບຂໍ້ມູນນີ້ຈາກແຫຼ່ງຕ່າງປະເທດ ຈະຂົ່ມຂູ່ຕໍ່ຄວາມໝັ້ນຄົງຂອງປະເທດ.

**ຂໍ້ຈຳກັດເພີ່ມຕື່ມສຳລັບຕົວແທນຕ່າງປະເທດ**

- ນັບແຕ່ນີ້ເປັນຕົ້ນໄປ, ຕົວແທນຕ່າງປະເທດ ຈະບໍ່ສາມາດເຂົ້າຮ່ວມກິດຈະກຳດ້ານການສຶກສາ ແລະ ການປູກຈິດສຳນຶກປະຊາຊົນ, ໃບອະນຸຍາດເຮັດວຽກໃນຂົງເຂດການສຶກສາຈະຖືກຍົກເລີກທັນທີ ຖ້າຜູ້ຖືໃບອະນຸຍາດໄດ້ຮັບສະຖານະພາບຕົວແທນຕ່າງປະເທດ.

- ຕົວແທນຕ່າງປະເທດ ຈະບໍ່ສາມາດເຂົ້າໄປໃນອົງການທີ່ຄຸ້ມຄອງບໍລິສັດທີ່ຄວບຄຸມໂດຍລັດຖະບານໄດ້ອີກຕໍ່ໄປ ເຊິ່ງໃຊ້ກັບບໍລິສັດຂອງລັດເຊັ່ນ: Roscosmos, Rosatom, Rostec ແລະ VEB.RF.

- ນັບແຕ່ນີ້ເປັນຕົ້ນໄປ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ (Non-profit organizations - NPOs) ທີ່ເປັນຕົວແທນຕ່າງປະເທດ ຈະບໍ່ສາມາດຖືກລວມເຂົ້າຢູ່ໃນທະບຽນຂອງ NPOs ທີ່ມຸ່ງເນັ້ນດ້ານສັງຄົມໄດ້.

- ມີການກຳນົດຫ້າມການສະໜັບສະໜູນທາງການເງິນຂອງເທດສະບານສຳລັບຕົວແທນຕ່າງປະເທດ; ກ່ອນໜ້ານີ້, ຂໍ້ຈຳກັດນີ້ໃຊ້ໄດ້ກັບການສະໜອງທຶນຂອງລັດຖະບານເທົ່ານັ້ນ.

**ການລົງໂທດສຳລັບອາຊະຍາກຳທີ່ກະທົບຕໍ່ລັດເຊຍ**

-ກົດລະບຽບສຳລັບການພິຈາລະນາຄະດີລັບຫຼັງບຸກຄົນທີ່ຢູ່ພາຍນອກລັດເຊຍ ໄດ້ຮັບການຂະຫຍາຍໃຫ້ກວມເອົາ 20 ປະເພດຂອງອາຊະຍາກຳ; ກ່ອນໜ້ານີ້, ການພິຈາລະນາຄະດີດັ່ງກ່າວແມ່ນໃຊ້ໄດ້ສະເພາະໃນຄະດີຮ້າຍແຮງ ແລະ ຮ້າຍແຮງເປັນພິເສດເທົ່ານັ້ນ.

- ໂດຍສະເພາະຢ່າງຍິ່ງ, ການພິຈາລະນາຄະດີລັບຫຼັງ ສາມາດດຳເນີນການໄດ້ນັບແຕ່ນີ້ເປັນຕົ້ນໄປ ໃນຄະດີທີ່ກ່ຽວຂ້ອງກັບການທຳລາຍ ຫຼື ສ້າງຄວາມເສຍຫາຍຕໍ່ຊຸມຝັງສົບ ແລະ ອະນຸສາວະລີທາງທະຫານ, ການຍົກຍ້ອງລັດທິນາຊີ, ການເຜີຍແຜ່ເລື່ອງເລົ່າປອມ ແລະ ເຮັດໃຫ້ກອງທັບຂອງສະຫະພັນລັດເຊຍເສື່ອມເສຍຊື່ສຽງ, ລວມທັງການຮຽກຮ້ອງໃຫ້ລະເມີດຜືນແຜ່ນດິນອັນຄົບຖ້ວນຂອງລັດເຊຍ.

- ການຮຽກຮ້ອງໃຫ້ກຳນົດ ຫຼື ຂະຫຍາຍການຂວ້ຳບາດສະຫະພັນລັດເຊຍ, ຫາກເຮັດເພື່ອຜົນປະໂຫຍດສ່ວນຕົວ ພວກເຂົາຈະຖືກລົງໂທດຈຳຄຸກບໍ່ເກີນ 5 ປີ ແລະ ປັບໃໝບໍ່ເກີນ 500,000 ຣູເບີນ (6 ພັນໂດລາສະຫະລັດ).

- ການທຳລາຍຊື່ສຽງຂອງກອງທັບລັດເຊຍແລະການຊ່ວຍເຫຼືອໃນການດຳເນີນການຕາມການຕັດສິນຂອງອົງການຈັດຕັ້ງສາກົນທີ່ລັດເຊຍບໍ່ໄດ້ເປັນສະມາຊິກ ມີໂທດຈຳຄຸກສູງສຸດ 7 ປີ ຫາກອາຊະຍາກຳນັ້ນເກີດຂຶ້ນເພື່ອຜົນປະໂຫຍດສ່ວນຕົວ.

# ພັກແຮງງານຂອງນາຍົກ ອັລບາເນຊີ ຊະນະຢ່າງຖ້ວມລົ້ນໃນການເລືອກຕັ້ງອົດສະຕຣາລີ

(Xinhua) - ພັກແຮງງານຝ່າຍກາງຊ້າຍຂອງນາຍົກລັດຖະມົນຕີ ແອນໂທນີ ອັລບາເນຊີ (Anthony Albanese) ໄດ້ຮັບໄຊຊະນະເປັນສະໄໝທີ 2 ໃນການເລືອກຕັ້ງລະດັບສະຫະພັນຂອງອົດສະຕຣາລີ.

ໃນຄືນວັນເສົາທີ 3 ພຶດສະພາຜ່ານມາ, ພັກແຮງງານຍັງຮັກສາອຳນາດເອົາໄວ້ໄດ້ ຫຼັງຈາກຊະນະການເລືອກຕັ້ງຢ່າງຖ້ວມລົ້ນ, ຄາດວ່າຈະສົ່ງຜົນໃຫ້ພັກມີທີ່ນັ່ງຫຼາຍທີ່ສຸດໃນສະພາຕ່ຳຂອງລັດຖະສະພາສະຫະພັນ ເຊິ່ງເປັນບ່ອນຈັດຕັ້ງລັດຖະບານ, ຕາມການຄາດຄະເນຂອງສະຖານີວິທະຍຸກະຈາຍສຽງອົດສະຕຣາລີ (Australian Broadcasting Corporation - ABC).

ເຮັດໃຫ້ອັລບາເນຊີເປັນຜູ້ນຳຄົນທຳອິດຂອງພັກການເມືອງໃຫຍ່ທັງສອງພັກ ທີ່ຊະນະການເລືອກຕັ້ງຕິດຕໍ່ກັນ ນັບຕັ້ງແຕ່ປີ 2004.

ອັລບາເນຊີ ກ່າວປາໄສໄຊຊະນະໃນກອງປະຊຸມພັກແຮງງານທີ່ນະຄອນຊິດນີ ເຊິ່ງເປັນບ້ານເກີດຂອງເຂົາ, ໂດຍໃຫ້ຄຳໝັ້ນສັນຍາວ່າຈະ "ບໍລິຫານປະເທດເພື່ອຊາວອົດສະຕຣາລີທຸກຄົນ" ແລະ ກ່າວວ່າ ລັດຖະບານທີ່ໄດ້ຮັບການເລືອກຕັ້ງຄືນໃໝ່ຈະໃຊ້ເວລາ "ທຸກໆວັນ" ຂອງສາມປີຂ້າງໜ້າ ເພື່ອຕອບແທນຄວາມໄວ້ເນື້ອເຊື່ອໃຈຂອງຜູ້ລົງຄະແນນສຽງ.

ພັກແຮງງານ ໄດ້ 93 ຈາກທັງໝົດ 150 ທີ່ນັ່ງໃນສະພາຜູ້ແທນລາສະດອນ ຂອງລັດຖະສະພາ ຊຸດທີ 48, ລື່ນກາຍສະຖິຕິສູງສຸດຂອງພັກ ທີ່ຊະນະໄດ້ 86 ທີ່ນັ່ງ ໃນການເລືອກຕັ້ງປີ 1986; ໃນຂະນະທີ່ພັນທະມິດຝ່າຍຄ້ານ ໄດ້ 43 ທີ່ນັ່ງ,



ສ່ວນທີ່ນັ່ງທີ່ຍັງເຫຼືອ ເປັນຂອງພັກຂະໜາດນ້ອຍ ແລະ ຜູ້ສະໝັກເອກະລາດ.

ໃນບັນດາທີ່ນັ່ງທີ່ພັກແຮງງານໄດ້ຮັບໄຊຊະນະ ແມ່ນມີທີ່ນັ່ງໃນເຂດເລືອກຕັ້ງດິກສັນ (Dickson) ຢູ່ທາງເໜືອຂອງບຣິສເບນ (Brisbane) ເມືອງຫຼວງ ແລະ ເມືອງທີ່ໃຫຍ່ທີ່ສຸດຂອງລັດຄວີນສ໌ແລນ(Queensland) ເຊິ່ງຖືຄອງໂດຍຜູ້ນຳຝ່າຍຄ້ານ ປີເຕີ ດັດຕັນ (Peter Dutton) ນັບຕັ້ງແຕ່ປີ 2001, ເຮັດໃຫ້ ດັດຕັນ ເປັນຜູ້ນຳຝ່າຍຄ້ານຄົນທຳອິດ ທີ່ສູນເສຍທີ່ນັ່ງໃນການເລືອກຕັ້ງລະດັບປະເທດ ໃນປະຫວັດສາດອົດສະຕຣາລີ.

ການພ່າຍແພ້ຂອງ ດັດຕັນ ໝາຍຄວາມວ່າ ບັນດາສະມາຊິກພັກເສລີນິຍົມ ທີ່ເປັນຄູ່ຮ່ວມອາວຸໂສໃນພັນທະມິດຝ່າຍຄ້ານ ຈະຕ້ອງເລືອກຫົວໜ້າພັກຄົນໃໝ່ເພື່ອດຳລົງຕຳແໜ່ງຜູ້ນຳຝ່າຍຄ້ານໃນລັດຖະສະພາ ຊຸດທີ 48.

ວັນທີ 3 ພຶດສະພາ, ໄດ້ມີການເປີດໜ່ວຍປ່ອນບັດເລືອກຕັ້ງຫຼາຍກວ່າ 7,000 ແຫ່ງໃນທົ່ວປະເທດ, ນອກນີ້ຍັງມີ 111 ສູນປ່ອນບັດຢູ່ຕ່າງປະເທດ ໃນ 83 ປະເທດ ເຊິ່ງຫຼາຍກວ່າການເລືອກຕັ້ງຄັ້ງຜ່ານໆມາ; ການລົງຄະແນນສຽງໃນການເລືອກຕັ້ງເປັນຂໍ້ບັງຄັບສຳລັບພົນລະເມືອງອົດສະຕຣາລີທຸກຄົນທີ່ມີອາຍຸ 18 ປີຂຶ້ນໄປ ແລະ ໄດ້ລົງທະບຽນໄວ້ໃນທະບຽນລາຍຊື່ຜູ້ມີສິດເລືອກຕັ້ງ ທີ່ຮັກສາໄວ້ໂດຍຄະນະກຳມະການເລືອກຕັ້ງອົດສະຕຣາລີ (Australian Electoral Commission - AEC) ຫຼາຍກວ່າ 18 ລ້ານຄົນ, ຜູ້ທີ່ບໍ່ປະຕິບັດຕາມ ຈະຖືກປັບໃໝທາງບໍລິຫານເລັກໜ້ອຍ.

ເມື່ອຊາວອົດສະຕຣາລີລົງຄະແນນສຽງໃນການເລືອກຕັ້ງລະດັບສະຫະພັນ, ພວກເຂົາຈະຂີດບັດລົງຄະແນນ 2 ໃບ, ໃບໜຶ່ງສຳລັບສະພາຜູ້ແທນລາສະດອນ ແລະ ໃບໜຶ່ງສຳລັບສະພາສູງ (76 ທີ່ນັ່ງ); ແຕ່ລະທີ່ນັ່ງໃນສະພາຕ່ຳ ຈະເປັນຕົວແທນຂອງເຂດເລືອກຕັ້ງ ທີ່ມີການແບ່ງຕາມພື້ນທີ່ ເຊິ່ງແຕ່ລະເຂດຈະມີຈຳນວນຜູ້ມີສິດເລືອກຕັ້ງໃກ້ຄຽງກັນ, ໃນຂະນະທີ່ສະມາຊິກສະພາສູງ ຈະເປັນຕົວແທນຂອງລັດຫຼືເຂດປົກຄອງຂອງຕົນ.

# PAP ຊະນະເລືອກຕັ້ງຢ່າງຖ້ວມລົ້ນ ທ່າມກາງຄວາມເຄັ່ງຕຶງທົ່ວໂລກ

**ຮຽບຮຽງໂດຍ: ວິລະພັດ ພາບວິໄຊ**

ພັກກິດປະຊາຊົນ (People's Action Party - PAP) ເຊິ່ງເປັນພັກລັດຖະບານຂອງສິງກະໂປ ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນໃນການເລືອກຕັ້ງທົ່ວໄປເມື່ອວັນເສົາທີ 3 ພຶດສະພາຜ່ານມາ ໂດຍໄດ້ຮັບ 65.57% ຂອງຄະແນນສຽງນິຍົມ, ຕາມຜົນການເລືອກຕັ້ງຢ່າງເປັນທາງການທີ່ເປີດເຜີຍໃນຕອນເຊົ້າວັນອາທິດ. ຄະແນນສຽງຂອງພັກລັດຖະບານເພີ່ມຂຶ້ນຈາກ 61.24% ໃນປີ 2020 ເປັນ 65.57% ໃນຄັ້ງນີ້ ໂດຍໄດ້ຮັບ 87 ຈາກທັງໝົດ 97 ທີ່ນັ່ງໃນລັດຖະສະພາທີ່ມີການແຂ່ງຂັນ, ໃນນັ້ນ ມີຫຼາຍທີ່ນັ່ງທີ່ມີຄະແນນນຳຫ່າງຢ່າງໜ້າສົນໃຈ; ໃນຂະນະທີ່ພັກແຮງງານ ເຊິ່ງເປັນພັກຝ່າຍຄ້ານພຽງພັກດຽວ ໄດ້ 10 ທີ່ນັ່ງ.

ລໍເຣນ ຫວອງ (Lawrence Wong) ອາຍຸ 52 ປີ, ຜູ້ສືບທອດຕຳແໜ່ງນາຍົກລັດຖະມົນຕີຕໍ່ຈາກ ລີ ຊຽນ ລຸງ (Lee Hsien Loong) ໃນເດືອນພຶດສະພາ 2024 ຫຼັງຈາກ ລີ ດຳລົງຕຳແໜ່ງມາເປັນເວລາ2ທົດສະວັດ, ໄດ້ກ່າວໃນຕອນເຊົ້າວັນອາທິດວ່າ ຊາວສິງກະໂປໄດ້ມອບອຳນາດທີ່ "ຈະແຈ້ງ ແລະ ເຂັ້ມແຂງ" ໃຫ້ກັບ PAP.

ຜົນການເລືອກຕັ້ງຊີ້ໃຫ້ເຫັນວ່າ ຜູ້ມີສິດເລືອກຕັ້ງຮັບຮູ້ເປັນຢ່າງດີເຖິງສິ່ງທ້າທາຍອັນໃຫຍ່ຫຼວງຂອງສິງກະໂປ ໂດຍສະເພາະຢ່າງຍິ່ງຫຼັງຈາກການເກັບພາສີຂອງສະຫະລັດທີ່ສູງຂຶ້ນ ເຊິ່ງສົ່ງຜົນກະທົບຕໍ່ປະເທດຕ່າງໆ ເຊັ່ນ ສິງກະໂປ ທີ່ອາໄສການຄ້າໂລກຢ່າງຫຼວງຫຼາຍ.




**ໄຊຊະນະທີ່ເຂັ້ມແຂງກວ່າທີ່ຄາດໄວ້**

ການແຂ່ງຂັນທີ່ໃກ້ຄຽງທີ່ສຸດເກືອບທັງໝົດກ່ອນການເລືອກຕັ້ງ, ໃນທີ່ສຸດກໍ່ພິກກັບມາເປັນຝ່າຍ PAP.

ໃນບັນດາການຕໍ່ສູ້ທີ່ສູສີທີ່ສຸດ ແມ່ນລະຫວ່າງ PAP ກັບ ພັກແຮງງານ (Workers' Party-WP) ເຊິ່ງເປັນພັກຝ່າຍຄ້ານທີ່ໃຫຍ່ທີ່ສຸດຂອງສິງກະໂປ; ໜຶ່ງໃນການປະທະກັນທີ່ໂດ່ງດັງເປັນຂ່າວໃຫຍ່ທີ່ສຸດ ໄດ້ເກີດຂຶ້ນທີ່ເມືອງພັງໂກນ (Punggol) ທາງພາກຕາເວັນອອກສຽງເໜືອ ເຊິ່ງສື່ມວນຊົນທ້ອງຖິ່ນຂະໜານນາມວ່າເປັນ "ດວງຕາແຫ່ງພາຍຸ" (eye of the storm).

ທີມຂອງ PAP ໃນເຂດເລືອກຕັ້ງທີ່ມີ4ທີ່ນັ່ງນີ້ນຳໂດຍ ການ ຄິມ ຢອງ (Gan Kim Yong) ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຄ້າ ແລະ ອຸດສາຫະກຳ ເຊິ່ງເປັນຫົວໜ້າຄະນະສະເພາະກິດ ດ້ານຄວາມຍືດຢຸ່ນທາງເສດຖະກິດ ທີ່ເປີດຕົວໃນເດືອນເມສາ ເພື່ອຜ່ອນຄາຍຜົນກະທົບຈາກອັດຕາພາສີຂອງສະຫະລັດ; ການ ອາຍຸ 66 ປີ, ເປັນທີ່ຮູ້ຈັກຈາກບຸກຄະລິກທີ່ສະຫງົບ ແລະ ໃຈເຢັນ ຖືເປັນເສົາຫຼັກຂອງລັດຖະບານສິງກະໂປ ໂດຍສະເພາະໃນການເຈລະຈາກັບສະຫະລັດ.

ຮາພຣີດ ຊິງ ເນຮານ (Harpreet Singh Nehal) ອາຍຸ 59 ປີ, ທະນາຍຄວາມອາວຸໂສ ທີ່ມີຜູ້ຕິດຕາມຈຳນວນຫຼາຍ ເປັນຜູ້ນຳທີມຂອງ WP.

ທັງສອງຝ່າຍໄດ້ຮັບຄວາມສົນໃຈຢ່າງສູງ ໂດຍ PAP ເນັ້ນຢ້ຳວ່າ ການ ພ່າຍແພ້ໃນເມືອງພັງໂກນ ຈະເປັນຄວາມເສຍຫາຍຮ້າຍແຮງສຳລັບສິງກະໂປ ເມື່ອພິຈາລະນາເຖິງບົດບາດສຳຄັນທີ່ ການ ມີ, ໃນຂະນະທີ່ WP ຕັ້ງຄຳຖາມຕໍ່ແນວຄິດຂອງ PAP ທີ່ວ່າ ບຸກຄົນໃດກໍ່ສາມາດຖືກແທນທີ່ໄດ້.

ໃນທ້າຍທີ່ສຸດ, ທີມຂອງ ການ ກໍ່ສາມາດຮັກສາເຂດເລືອກຕັ້ງໄດ້ດ້ວຍຄະແນນສຽງ 55.17% ເຊິ່ງຕ່ຳກວ່າຄະແນນສຽງທີ່ PAP ໂດຍປົກກະຕິຈະໄດ້ຮັບ60-70%, ເນັ້ນຢ້ຳເຖິງລັກສະນະການແຂ່ງຂັນແຫ່ງການແຂ່ງຂັນ.

**ປະສົບການ VS ການເປັນຕົວແທນ**

ການຕໍ່ສູ້ທີ່ເມືອງພັງໂກນສະທ້ອນໃຫ້ເຫັນໜຶ່ງໃນຄຳຖາມສຳຄັນຂອງການເລືອກຕັ້ງ ນັ້ນຄື: ພວກເຮົາຄວນໃຫ້ຄວາມສຳຄັນກັບສະຖຽນລະພາບແລະປະສົບການຫຼາຍຂຶ້ນ ຫຼື ປ່ຽນໄປສູ່ລັດຖະສະພາທີ່ມີຫຼາຍຝ່າຍເພີ່ມຂຶ້ນ ພ້ອມການກວດສອບທີ່ເຂັ້ມງວດຂຶ້ນ?

ສິ່ງທ້າທາຍທີ່ເກີດຂຶ້ນນັ້ນບໍ່ອາດປະຕິເສດໄດ້; ຄ່າຄອງຊີບທີ່ສູງຂຶ້ນ ຍັງຄົງເປັນຄວາມກັງວົນຕົ້ນຕໍສຳລັບຜູ້ມີສິດເລືອກຕັ້ງ, ໂດຍອັດຕາເງິນເຟີ້ ແລະ ລາຄາສິນຄ້າທີ່ສູງຂຶ້ນ ສົ່ງຜົນກະທົບຢ່າງໜັກໜ່ວງໃນຊຸມປີທີ່ຜ່ານມາ ເຊິ່ງທັງລັດຖະບານ ແລະ ຝ່າຍຄ້ານ ລ້ວນແຕ່ຍອມຮັບບັນຫານີ້.

ສາເຫດສ່ວນໃຫຍ່ແມ່ນມາຈາກປັດໄຈພາຍນອກລວມທັງການລະບາດຂອງ COVID-19 ແລະ ຄວາມຂັດແຍ້ງລະຫວ່າງລັດເຊຍ ກັບ ຢູແກຣນ; ຜູ້ມີສິດເລືອກຕັ້ງຈຳນວນຫຼາຍຮູ້ສຶກວ່າ ເຖິງແມ່ນວ່າການຈັດການຂອງ PAP ຈະບໍ່ສົມບູນແບບ, ແຕ່ຝ່າຍຄ້ານກໍຍັງບໍ່ສາມາດສະເໜີແນວທາງການແກ້ໄຂທີ່ເປັນໄປໄດ້ຢ່າງແທ້ຈິງ.

ຄວາມປັ່ນປ່ວນທີ່ເກີດຈາກການເກັບພາສີຂອງສະຫະລັດທີ່ສູງຂຶ້ນ ພຽງແຕ່ເຮັດໃຫ້ຄວາມບໍ່ແນ່ນອນນີ້ ເພີ່ມທະວີຄວາມຮຸນແຮງຂຶ້ນເທົ່ານັ້ນ; ຕາມຂໍ້ມູນອົງການການເງິນຂອງສິງກະໂປ, ສະຫະລັດແມ່ນຕະຫຼາດໃຫຍ່ອັນດັບສອງຂອງສິງກະໂປ ໂດຍສິນຄ້າທີ່ຢູ່ພາຍໃຕ້ການເກັບພາສີພື້ນຖານກວມເອົາປະມານ 55% ຂອງການສົ່ງອອກຂອງສິງກະໂປໄປຍັງສະຫະລັດ.

ຫວອງ ແລະ ລີ ໄດ້ກ່າວເຕືອນຊ້ຳແລ້ວຊ້ຳອີກວ່າ ນະໂຍບາຍກີດກັນທາງການຄ້າ(protectionism) ຂອງສະຫະລັດເປັນໄພຂົ່ມຂູ່ຕໍ່ມາດຕະຖານການຄ້າໂລກ ເຊິ່ງສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ສິງກະໂປທີ່ອາໄສການຄ້າ. ກະຊວງການຄ້າ ແລະ ອຸດສາຫະກຳ ໄດ້ປັບຫຼຸດການຄາດຄະເນການເຕີບໂຕທາງເສດຖະກິດໃນປີ 2025 ເພື່ອຕອບສະໜອງ.

ປີເຕີ ອອງ (Peter Ong) ຮອງຫົວໜ້າບັນນາທິການໜັງສືພິມທ້ອງຖິ່ນ Lianhe Zaobao ໃຫ້ຂໍ້ສັງເກດວ່າ, ບັນຫາສຳຄັນໃນການເລືອກຕັ້ງຄັ້ງນີ້ ແມ່ນ PAP ຄວນໄດ້ຮັບອຳນາດທີ່ເຂັ້ມແຂງເພື່ອຮັບມືກັບຄວາມປັ່ນປ່ວນທົ່ວໂລກ ນັບແຕ່ສົງຄາມການຄ້າໄປຈົນເຖິງການປ່ຽນແປງພູມສາດການເມືອງ ຫຼື ສິງກະໂປ ຄວນກ້າວໄປສູ່ລັດຖະສະພາທີ່ມີຄວາມຫຼາກຫຼາຍຂຶ້ນ ພ້ອມການກວດສອບແລະຖ່ວງດຸນທີ່ເຂັ້ມງວດຂຶ້ນ.

**(ຂໍ້ມູນຈາກເວັບໄຊຂ່າວຊິນຮວາ)**

ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ນະໂຍບາຍ ແລະ ສີສັນ ຂອງການທ່ອງທ່ຽວ

ຈາກການປະມວນຂ່າວໜ້າສົນໃຈຢູ່ຕ່າງປະເທດໃນ 3 ເດືອນຕົ້ນປີ 2025 ຜູ້ຂຽນເລີຍພົບວ່າ ຂ່າວກ່ຽວກັບການທ່ອງທ່ຽວນັ້ນກວມພື້ນທີ່ອ່າວຫຼາຍທຽບກັບຂ່າວ. ອື່ນໆດັ່ງນັ້ນ, ຜູ້ຂຽນຈຶ່ງຂໍສັງລວມບາງເນື້ອໃນເພື່ອໃຫ້ພວກເຮົາເບິ່ງໄວ້ເປັນບົດຮຽນ ຄືເລີ່ມຈາກຂ່າວນະຄອນຮ່າຢາງ, ຫວຽດນາມ ໄດ້ຮັບລາງວັນທ່ອງທ່ຽວອາຊຽນ ປະຈໍາ 2025 ໂດຍອີງໃສ່ຜົນງານການທ່ອງທ່ຽວແບບຊຸມຊົນທີ່ນະຄອນຮ່າຢາງ ເຮັດໄດ້ດີເລີດໃນປີ 2024, ລາງວັນທີ່ວ່ານັ້ນ ມອບກັນໃນວັນທີ 20 ມັງກອນປີນີ້ ຢູ່ມາເລເຊຍ ໃນກອງປະຊຸມເວທີການທ່ອງທ່ຽວອາຊຽນ (ATF) ປີ 2025 ແມ່ນຮອບວຽນການເປັນປະທານ ອາຊຽນ ຂອງມາເລເຊຍ (ຕໍ່ຈາກລາວ ໃນປີ 2024). ການທ່ອງທ່ຽວຊຸມຊົນທີ່ເຮັດໃຫ້ນະຄອນຮ່າຢາງ ໄດ້ຮັບລາງວັນໃນນີ້ກໍຄືການທ່ອງທ່ຽວແບບໃຫ້ນັກທ່ອງທ່ຽວໄດ້ໄປພັກເຊົາກັບບັນດາຄົວເຮືອນເພື່ອສຶກສາວິຖີຊີວິດ, ວັດທະນະທໍາ, ຮີດຄອງປະເພນີຂອງຄົນພື້ນເມືອງໂດຍກົງ; ການທ່ອງທ່ຽວແບບນີ້ພາສາອັງກິດເອີ້ນວ່າ: ໂຮມສະເຕ (Home Stay) ຢູ່ນະ ຄອນຮ່າຢາງ ແຂວງຮ່າຢາງ ນັ້ນ ມີ 16 ບ້ານ ໃນຕາແສງເຟືອງໂດ້ ທີ່ອອກໜ້າອອກຕາໃນການສົ່ງເສີມ ແລະ ພັດທະນາການທ່ອງທ່ຽວແບບ Home Stay ຈົນໄດ້ເຄື່ອງໝາຍການຄ້າອອກສູ່ໂລກ ໂດຍສະເພາະແມ່ນໃນອາຊຽນ. ການທ່ອງທ່ຽວແບບ Home Stay ນີ້ ນອກຈາກນັກທ່ອງທ່ຽວຈະໄດ້ມີໂອກາດສໍາພັດກັບຂອງຈິງແລ້ວ ຍັງເປັນການກະຈາຍລາຍໄດ້ຈາກການທ່ອງທ່ຽວສູ່ຊຸມຊົນໂດຍກົງ ເພາະວ່າຊາວບ້ານມີລາຍໄດ້ຈາກການຂາຍຜະລິດຕະພັນເຄື່ອງຫັດຖະກໍາ, ອາຫານພື້ນບ້ານ, ການບໍລິການປິ່ນປົວດ້ວຍສະໝຸນໄພ, ການສະແດງສິລະປະ ແລະ ອື່ນໆ; ໃນຊຸມປີຜ່ານມາ, ນະຄອນຮ່າຢາງ ໄດ້ສຸມໃສ່ພັດທະນາໂຄງລ່າງ, ອານຸລັກຄຸນຄ່າທາງວັດທະນະທໍາທີ່ເປັນມູນເຊື້ອ, ບໍາລຸງສ້າງຊັບພະຍາກອນມະນຸດ, ຍົກສູງຄຸນນະພາບໃນການໃຫ້ບໍລິການແກ່ນັກທ່ອງທ່ຽວ. ຢູ່ລາວພວກເຮົາກໍຄວນເນັ້ນການທ່ອງທ່ຽວແບບຊຸມຊົນ, ແຕ່ກ່ອນອື່ນຕ້ອງໄດ້ເອົາໃຈໃສ່ພັດທະນາໂຄງລ່າງ ແລະ ຈັດສັນບັນດາບ້ານທີ່ມີເງື່ອນໄຂເໝາະສົມ ສໍາລັບຮອງຮັບນັກທ່ອງທ່ຽວ Home Stay.

ສໍາລັບຂ່າວຈາກ ສປຈີນ ນັ້ນ ກໍມີເລື່ອງທາງການຂອງກິ່ງແຂວງສິບສອງພັນນາ ໄດ້ປະກາດຍົກເວັ້ນວີຊາສໍາລັບກຸ່ມນັກທ່ອງທ່ຽວຈາກບັນດາປະເທດສະມາຊິກອາຊຽນ ທີ່ເຂົ້າໄປທ່ອງທ່ຽວຢູ່ກິ່ງແຂວງນີ້ ເຊິ່ງໄດ້ປະຕິບັດມາແຕ່ວັນ ທີ 10 ກຸມພາປີນີ້ເອງ, ຄໍາວ່າກຸ່ມນັກທ່ອງທ່ຽວນັ້ນ ໝາຍຄວາມວ່າມີນັກທ່ອງທ່ຽວແຕ່ 2 ຄົນຂຶ້ນໄປ; ເງື່ອນໄຂທີ່ຈະໄດ້ຮັບການຍົກເວັ້ນວີຊາ ກໍຄືນັກທ່ອງທ່ຽວຕ້ອງມີໜັງສືຜ່ານແດນທົ່ວໄປ, ເຂົ້າໄປທ່ຽວຜ່ານບໍລິສັດທ່ອງທ່ຽວຈີນ ໂດຍເຂົ້າທາງສະໜາມບິນສາກົນສິບສອງພັນນາ, ທາງລົດໄຟ, ດ່ານທາງຫຼວງບໍ່ຫານ. ນັກທ່ອງທ່ຽວທີ່ໄດ້ຮັບການຍົກເວັ້ນວີຊາ ສາມາດຢູ່ທ່ອງທ່ຽວໃນກິ່ງແຂວງໄດ້ເປັນເວລາ 6 ວັນ.

ບັດນີ້ມາເບິ່ງລະບຽບການໃໝ່ຂອງປະເທດເນປານ ທີ່ປະກາດຫ້າມນັກທ່ອງທ່ຽວປີນ ຫຼື ເຮັດການສໍາຫຼວດແບບຄົນດຽວຕາມພູທີ່ມີຄວາມສູງເກີນ 8,000 ແມັດ ທັງນີ້ກໍເພື່ອຄວາມປອດໄພຂອງນັກທ່ອງທ່ຽວເອງ, ໂດຍເລີ່ມແຕ່ຕົ້ນປີນີ້ ນັກທ່ອງທ່ຽວທີ່ຕ້ອງການທ່ຽວຊົມຕາມສັນພູທີ່ມີຄວາມສູງເກີນ 8,000 ແມັດ ຈະຕ້ອງມີຜູ້ຕິດຕາມນໍາພາ. ປະເທດເນປານ ມີພູສູງເກີນ 8,000 ແມັດ ຈໍານວນ 8 ໜ່ວຍ ທີ່ດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວພະຈົນໄພໃນທົ່ວໂລກ, ໄລຍະເວລາທີ່ມີນັກທ່ອງທ່ຽວຕ້ອງການປີນພູສູງເຫຼົ່ານີ້ ແມ່ນໃນລະດູບານໃໝ່; ແນ່ນອນທາງການເນ ປານ ບໍ່ຕ້ອງການໃຫ້ນັກທ່ອງທ່ຽວພະຈົນໄພເຖິງຂັ້ນປະສົບກັບໄພອັນຕະລາຍ.

ຢູ່ມາເລເຊຍ, ປະເທດເປົ້າໝາຍກອງປະຊຸມອາຊຽນ ປະຈໍາປີ 2025 ກໍໄດ້ເປີດເຜີຍແຜນພັດທະນາການທ່ອງ ທ່ຽວທີ່ເປັນເອກະລັກສໍາລັບ "ປີທ່ອງທ່ຽວມາເລເຊຍ" ໃນປີ 2026 ຈຸດທີ່ເປັນເປົ້າໝາຍແຫ່ງເອກະລັກນັ້ນໄດ້ແກ່ເມືອງເກດະ, ສະລັງງໍ, ມະລາກາ, ລັດຊາບາ ແລະ ຊາຣາວັກ; ບັນດາຈຸດທີ່ກ່າວມາຂ້າງເທິງນັ້ນ ມີຄວາມສວຍງາມທາງທໍາມະຊາດ, ມີສະຖານທີ່ບູຮານຄະດີ, ເປັນເຂດທີ່ສະດວກສະບາຍສໍາລັບການຄ້າຂາຍ, ມີອາຫານຖືກປາກລົດ ຊາດບໍ່ຄືໃຜ ແລະ ບໍ່ມີໃຜຄື.

ທະນາຄານພັດທະນາລາວ
LDB Bank




# ບໍ່ຈໍາເປັນດອກ

*# ບ່າວກະບື*

**ວັນ**ໜຶ່ງ ທ່ານສະວິບ ນັກປະພັນອັງກິດຜູ້ລືຊື່, ເດີນທາງທ່ອງທ່ຽວກັບຄົນໃຊ້ຂອງທ່ານດ້ວຍມ້າ. ເວລານັ້ນ ເສັ້ນທາງເຕັມໄປດ້ວຍຕົມຍ້ອນຝົນຖອກເທລົງມາ. ໃນຕອນຄໍ່າ, ທັງສອງຄົນເດີນທາງໄປເຖິງໂຮງແຮມ, ກ່ອນເຂົ້ານອນ ທ່ານສະວິບເວົ້າກັບຄົນໃຊ້ເຂົາວ່າ: "ເກີບບູດຂອງຂ້ອຍເປື້ອນ, ຊ່ວຍເອົາໄປອະນາໄມໃຫ້ແດ່ເນີ." ຄົນໃຊ້ເປັນຄົນຂີ້ຄ້ານແດ່, ນອກນັ້ນເຂົາຍັງອິດເມື່ອຍ; ດັ່ງນັ້ນ, ເຂົາຈຶ່ງກ່ອມກ້ອຍເຂົ້ານອນ ໂດຍບໍ່ໄດ້ປະຕິບັດສິ່ງທີ່ນາຍສັ່ງໄວ້.

ເຊົ້າມື້ໃໝ່, ເມື່ອເຫັນເກີບບູດ, ທ່ານສະວິບຮ້ອງລັ່ນອອກມາວ່າ: "ວ້າວ! ເຈົ້າບໍ່ໄດ້ອະນາໄມເກີບບູດຂ້ອຍຊໍ້າໄດ໋ຫັ້ນບໍ່", "ມັນເປັນຈັ່ງຊີ້ທ່ານ... ກໍຍ້ອນວ່າດິນຟ້າອາກາດມັນບໍ່ດີ ແລະ ພວກເຮົາກໍຍັງຈະສືບຕໍ່ເດີນທາງອີກ, ຖ້າຂ້ານ້ອຍທາກເຮັດອະນາໄມ, ອີກບໍ່ດົນມັນກໍຊິເປື້ອນຄືເກົ່າຫັ້ນລະ".

"ຊັ້ນດີຫຼາຍ, ເອົາອານຄາດຫຼັງມ້າ, ພວກເຮົາຕ້ອງອອກເດີນທາງໃນບໍ່ຊ້ານີ້ໂລດ"

"ແຕ່ຟ້າວກ່ອນທ່ານ... ພວກເຮົາບໍ່ທັນໄດ້ກິນເຂົ້າເຊົ້າເທື່ອ"

"ໂອ໋ຍ... ບໍ່ເປັນຫຍັງດອກ, ຖ້າເຈົ້າກິນເຂົ້າເຊົ້າດຽວນີ້, ອີກບໍ່ດົນເຈົ້າກໍຊິຫິວອີກດອກ" ທ່ານສະວິບວ່າ.

# No Need

*# BAOKBU*

Swift, the famous English writer, was travelling on a horseback one day with a servant. As it was raining, the roads were muddy. In the evening, the two men came to an inn, and before going to bed Swift said to the rervant : "My boots are dirty, clean them, please!" The servant was rather lazy, besides he was tired so he went to bed without doing what his master had said.

The next morning, when Swift saw the boots, he exclaimed: "What! you have not cleaned my dirty boots."

"Well, sir, because of the bad weather, and because we are going to travel again, if I cleaned them now, they would soon become as dirty as before". said the servant.

"Very good. Saddle the horses. We shall start immediately".

But, please Sir, we have not had our breakfast!"

"Oh never mind! should you take your breakfast now, you should soon be hungry again" said Swift.




● ໂດຍ : ພູຜາ

**ຜູ້ຊີ້ນໍາ**
ທ່ານ ສົງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມົ່ງມູງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ